ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08
ພຶດສະພາ
2026
ປີທີ 15
ສະບັບທີ 1064
ລາຍສັປະດາ

## ເປີດນຳໃຊ້ອາຄານເຮັດວຽກແລະຫ້ອງປະຊຸມ ສພຂ ຈຳປາສັກ



(ສພຂ) - ພິທີເປີດນຳໃຊ້ອາຄານຕໍ່ເຕີມຫ້ອງເຮັດວຽກ ແລະ ຫ້ອງປະຊຸມ ສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ຢ່າງເປັນທາງການ ໄດ້ຈັດຂຶ້ນໃນວັນທີ 21 ເມສາຜ່ານມາ ໂດຍໃຫ້ກຽດເຂົ້າຮ່ວມຂອງ ທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ; ທ່ານ

ອ່ານຕໍ່ໜ້າ 3

## ຮອງປະທານສະພາແຫ່ງຊາດ ເຄື່ອນໄຫວວຽກງານຢູ່ເມືອງຮົ່ມ



(ສພຊ) - ລະຫວ່າງວັນທີ 28-30 ເມສາ 2026, ທ່ານ ມອນໄຊ ລາວມົວຊື່ງ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍ ຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ໄຊສົມບູນ ປະຈຳເຂດເລືອກຕັ້ງເມືອງຮົ່ມ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງໄຊສົມບູນ ຊຸດທີ V ຢູ່ເມືອງຮົ່ມ ລວມ 5 ຈຸດຄື: ສະໂມສອນເມືອງ, ບ້ານນ້ຳທວຍ, ບ້ານພູກະທະ, ບ້ານນ້ຳປຸ່ງ ແລະ ບ້ານຜາລະແວກ ໂດຍມີອຳນາດການປົກຄອງເມືອງ-ບ້ານ ແລະ ພໍ່

ອ່ານຕໍ່ໜ້າ 5

## ເຜີຍແຜ່ນິຕິກຳ ແລະ ປື້ມຄູ່ມືການພົບປະປະຊາຊົນ




(ສພຊ) - ກອງປະຊຸມເຜີຍແຜ່ນິຕິກຳຂອງຄະນະປະຈຳສະພາແຫ່ງຊາດ ແລະ ປື້ມຄູ່ມືການພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໄດ້ຈັດຂຶ້ນໃນວັນທີ 4-5 ພຶດສະພານີ້ທີ່ສະໂມສອນຂອງໂຮງຮຽນທິດສະດີການເມືອງ-ການ

ອ່ານຕໍ່ໜ້າ 4

## ປະທານກຳມາທິການການຕ່າງປະເທດ ຕ້ອນຮັບການຢ້ຽມຂ່ຳນັບຂອງທູດໄທ



ອ່ານຕໍ່ໜ້າ 8



ແນວຄິດປະທານ
### ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ພວກເຮົາຕ້ອງຕີລາຄາສະພາບການຕົວຈິງໃນດ້ານຕ່າງໆ ຢ່າງຖືກຕ້ອງ, ເຫັນຜົນງານທີ່ຍາດມາໄດ້ ແລະ ຂໍ້ຂາດຕົກບົກຜ່ອງຄົງຄ້າງ, ເຫັນສາເຫດແຫ່ງຄວາມສຳເລັດ ແລະ ບໍ່ສຳເລັດ, ເຫັນໄດ້ຈຸດພິເສດ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆ ແລ້ວຈຶ່ງເລີ່ມຈາກສິ່ງດັ່ງກ່າວນັ້ນ ເພື່ອກຳນົດທິດທາງ ແລະ ໜ້າທີ່ໃນຊຸມປີຕໍ່ໜ້າ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 350)

ອ່ານຕໍ່ສະບັບໜ້າ




## ກົນໄກການພົວພັນລະຫວ່າງ ຄປຈສພຊ ແລະ ຄະນະປະຈຳ ສນຊ



(ສພຊ) - ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສູນກາງພັກ, ກຳມະການຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ ໄດ້ຂຶ້ນປະກອບຄຳເຫັນຕໍ່ກອງປະຊຸມໃຫຍ່ຜູ້ແທນແນວລາວສ້າງຊາດທົ່ວປະເທດ ຄັ້ງທີ XII ພາຍໃຕ້ຫົວຂໍ້: "ກົນໄກການພົວພັນລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະປະຈຳສູນກາງແນວລາວສ້າງຊາດ"ເຊິ່ງມີບາງຕອນສຳຄັນວ່າ: ຕະຫຼອດໄລຍະ 5 ປີຜ່ານມາ, ຄປຈສພຊ ໄດ້ມອບໝາຍໃຫ້ກຳມາທິການບັນດາເຜົ່າ ເປັນເສນາທິການປະສານສົມທົບໂດຍກົງກັບສູນກາງແນວລາວ

ອ່ານຕໍ່ໜ້າ 8

### ສຽງສະອື້ນ ຈາກແມ່

(ໜ້າ 5)



ສະພາແຫ່ງຊາດ...

(ໜ້າ 6)

### ເຝົ້າໄວ້ ໄດ້ຍິນຮຽນ

❖ ວິເສດ ສະແຫວງສຶກສາ

ເຮັດວຽກຢູ່ເຮືອນ...

(ໜ້າ 8)

**ຊົມເຊີຍວັນກຳມະກອນສາກົນ ຄົບຮອບ 140 ປີ (01 ພຶດສະພາ 1886 - 01 ພຶດສະພາ 2026) ຢ່າງສຸດໃຈ!**

# ກອງປະຊຸມຄະນະກຳມາທິການການເມືອງຂອງ APF




(ສພຊ) - ລະຫວ່າງວັນທີ 2-4 ພຶດສະພາ 2026, ຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສປປລາວ ນຳໂດຍທ່ານ ມີໄຊ ພິມເຂສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ, ຮອງຫົວໜ້າຫ້ອງວ່າການສູນກາງພັກ ໄດ້ເຂົ້າຮ່ວມກອງປະຊຸມຄະນະກຳມາທິການການເມືອງຂອງສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ (AssembléeParlementaire de la Francophonie - APF) ແລະ ກອງປະຊຸມສຳມະນາລັດຖະສະພາກ່ຽວກັບ “ບົດບາດສຳຄັນ, ການຄຸ້ມຄອງ ແລະ ການນຳໃຊ້ ດິຈິຕອນ ແລະ ປັນຍາປະດິດ (AI) ໃນລັດຖະສະພາ” ທີ່ເມືອງຊຽມຣຽບ, ລາຊະອານາຈັກກຳປູເຈຍ ເຊິ່ງມີຄະນະຜູ້ແທນຈາກບັນດາສະມາຊິກ APF 15 ປະເທດ ແລະ ເຂດແຄວ້ນ ເຊັ່ນ: ແບນຊິກ, ກາເມີຣູນ, ກາຕານໂລ, ກົດດີວົວ, ຝຣັ່ງ, ສປປລາວ, ລຸກຊຳບວກ, ມາຣົກ, ໂມຣິຕານີ, ນູແວນ ກາເລໂດນີ, ເກເບັກ, ກົງໂກ, ຣູມານີ, ເຊເນການ, ສະວິດ ແລະ 2 ອົງການຄື: ອົງການຝຣັ່ງໂກໂຟນີສາກົນ (OIF) ແລະ ສູນລັດຖະສະພາອາຊີ (PCAsia); ນອກນັ້ນ, ຍັງມີປະທານຄະນະກຳມາທິການການເມືອງ, ເລຂາທິການໃຫຍ່ ຂອງ APF, ບັນດາສະມາຊິກລັດຖະສະພາແລະເຈົ້າໜ້າທີ່ກ່ຽວຂ້ອງຂອງປະເທດເຈົ້າພາບ ລວມຜູ້ເຂົ້າຮ່ວມ 70 ກວ່າທ່ານ.

ກອງປະຊຸມຄະນະກຳມາທິການການເມືອງຂອງ APF ໄດ້ພິຈາລະນາ ແລະ ຮັບຮອງເອົາວາລະກອງປະຊຸມ; ປັບປຸງ ແລະ ຮັບຮອງເອົາບົດບັນທຶກວ່າດ້ວຍການພິຈາລະນາຕົກລົງບົດລາຍງານຂອງກອງປະຊຸມກຳມາທິການການເມືອງທີ່ຈັດຂຶ້ນໃນເດືອນກໍລະກົດ 2025 ທີ່ນະຄອນປາຣີ, ປະເທດຝຣັ່ງ; ທົບທວນຄືນ ແລະ ຮັບຮອງເອົາບົດລາຍງານກ່ຽວກັບສະຖານະການທາງດ້ານການເມືອງໃນບັນດາປະເທດທີ່ໃຊ້ພາສາຝຣັ່ງ; ພິຈາລະນາ ແລະ ຮັບຮອງເອົາແຜນປະຕິບັດງານ 2025-2030 ເພື່ອສົ່ງເສີມການຍົກເລີກໂທດປະຫານຊີວິດ ໃນຂົງເຂດບັນດາປະເທດທີ່ໃຊ້ພາສາຝຣັ່ງ; ຮັບຟັງການລາຍງານກ່ຽວກັບສະພາບການທາງດ້ານການເມືອງຂອງບັນດາຄະນະ APF ຂອງບັນດາປະເທດທີ່ເປັນສະມາຊິກ ເຊິ່ງໃນວາລະນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ໃນນາມສະມາຊິກສົມບູນຂອງ APF ໄດ້ລາຍງານສະພາບການພົ້ນເດັ່ນທາງດ້ານການເມືອງ ເປັນຕົ້ນແມ່ນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ທີ່ຈັດຂຶ້ນໃນເດືອນກຸມພາຜ່ານມາ ແລະ ຜົນສຳເລັດຂອງກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X. ພ້ອມນັ້ນ, ບັນດາຜູ້ແທນກອງປະຊຸມ ຍັງໄດ້ແລກປ່ຽນ ແລະ ປຶກສາຫາລືກ່ຽວກັບທັດສະນະຂອງ APF ສຳລັບກອງປະຊຸມສຸດຍອດຝຣັ່ງໂກໂຟນີສາກົນ ຄັ້ງທີ 20 (Le XXe SommetdelaFrancophonie): ບົດບາດຂອງ APF ໃນສະຖຽນລະພາບໃນພາກພື້ນ ແລະ ທົ່ວໂລກ ແລະ ຄຳແນະນຳດ້ານນິຕິບັນຍັດເພື່ອນຳໃຊ້ສັນຕິພາບເປັນກົນໄກສຳລັບການພັດທະນາແບບຍືນຍົງ, ຮັບຟັງບົດລາຍງານກ່ຽວກັບການດຳເນີນວິທີການການໄກ່ເກ່ຍຂໍ້ຂັດແຍ້ງທາງການ ເມືອງໃນປະເທດກົງໂກ ແລະ ຣະວັນດາ; ຮັບຟັງ ແລະ ແລກປ່ຽນຄຳຄິດຄຳເຫັນໃນການດຳເນີນງານຂອງຄະນະກຳມາທິການສືບສວນອາຊະຍາກຳທາງການເງິນຂອງສະພາສູງຝຣັ່ງກ່ຽວກັບການຕ້ານອາຊະຍາກຳທາງການເງິນ, ອາຊະຍາກຳທີ່ມີການຈັດຕັ້ງ ແລະ ການຫຼີກລ່ຽງມາດຕະການການລົງໂທດສາກົນ; ຄົ້ນຄວ້າພິຈາລະນາຮ່າງບົດລາຍງານກ່ຽວກັບຄວາມປອງດອງແຫ່ງຊາດແລະຄວາມຍຸຕິທຳ ໃນສະໄໝຂ້າມຜ່ານ; ຮັບຮອງເອົາບົດລາຍງານສະບັບສຸດທ້າຍກ່ຽວກັບການຕ້ານຂ່າວປອມ ແລະ ການກະທຳໃນຮູບແບບທາງເລືອກ ໃນການສະໜອງທຶນໃຫ້ສື່ມວນຊົນ; ຮັບຮອງເອົາຮ່າງມະຕິກ່ຽວກັບການເພີ່ມທະວີບົດບາດຂອງສື່ສາທາລະນະ ໃນການຮັບມືກັບຂ່າວປອມ ແລະ ການປັບປຸງໂຄງສ້າງຂອງສື່ຕ່າງໆ; ປັບປຸງ ແລະ ຮັບຮອງເອົາຮ່າງມະຕິກ່ຽວກັບການສະໝັກເຂົ້າເປັນສະມາຊິກ APF ເພື່ອດຳລົງຕຳແໜ່ງຜູ້ສັງເກດການໃນອົງການສະຫະປະຊາຊາດ; ແລກປ່ຽນຄຳຄິດຄຳເຫັນກ່ຽວກັບບັນດາເຫດການພົ້ນເດັ່ນທີ່ເກີດຂຶ້ນພາຍໃນພາກພື້ນ ແລະ ທົ່ວໂລກ ໂດຍສະເພາະໃນຂົງເຂດປະເທດທີ່ໃຊ້ພາສາຝຣັ່ງ.

ກອງປະຊຸມຄະນະກຳມາທິການການເມືອງຂອງສະມັດຊາ APF ໄດ້ດຳເນີນໄປດ້ວຍບັນຍາກາດອັນອົບອຸ່ນ ເຕັມໄປດ້ວຍຄວາມສາມັກຄີ, ມີຄວາມເປັນເອກະພາບໃນການຮັບຮອງເນື້ອໃນຕາມຫົວຂໍ້ວາລະຂອງກອງປະຊຸມ ແລະ ໄດ້ຮັບຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍ; ພ້ອມກັນນີ້, ໄດ້ຕົກລົງມອບໃຫ້ປະເທດເບແນັງ ເປັນເຈົ້າພາບຈັດກອງປະຊຸມຄັ້ງຕໍ່ໄປ ໃນປີ 2027 ທີ່ເມືອງໂກໂຕນູ.

ກ່ອນໜ້າໜຶ່ງວັນເປີດກອງປະຊຸມກຳມາທິການການເມືອງ, ໄດ້ມີກອງປະຊຸມສຳມະນາລັດຖະສະພາເພື່ອສ້າງຄວາມເຂົ້າໃຈ ແລະ ໃຫ້ຄວາມຮູ້ກ່ຽວກັບວຽກງານການຄຸ້ມຄອງແລະນຳໃຊ້ປັນຍາປະດິດ ເຊິ່ງຄະນະຜູ້ແທນສະພາແຫ່ງຊາດລາວ ກໍໄດ້ເຂົ້າຮ່ວມ ແລະ ຮັບຟັງການສະເໜີເນື້ອໃນທີ່ເປັນພື້ນຖານຂອງຫົວຂໍ້ ຈາກບັນດາຊ່ຽວຊານຂອງປະເທດເຈົ້າພາບ, APF ແລະ ອົງການທີ່ກ່ຽວຂ້ອງ ພາຍໃຕ້ 4 ຫົວຂໍ້ ເຊັ່ນ: “ການສ້າງຄວາມເຂົ້າໃຈກ່ຽວກັບປັນຍາປະດິດ, ສະຖານະການໃນປັດຈຸບັນ: ກາລະໂອກາດ ແລະ ຄວາມສ່ຽງ”; “ບົດບາດຂອງລັດຖະສະພາໃນຖານະຂອງອົງການນິຕິບັນຍັດ ໃນການຄຸ້ມຄອງປັນຍາປະດິດ”; ເວທີສົນທະນາກ່ຽວກັບການຄຸ້ມຄອງປັນຍາປະດິດ ໃນບັນດາປະເທດທີ່ໃຊ້ພາສາຝຣັ່ງ”; “ປັນຍາປະດິດ ໃນວຽກງານລັດຖະສະພາ: ເຄື່ອງມື, ການນຳໃຊ້ ແລະ ນະວັດຕະກຳ”.

ໃນຕອນທ້າຍຂອງກອງປະຊຸມ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ເຂົ້າຮ່ວມບັນດາກິດຈະກຳທີ່ປະເທດເຈົ້າພາບຈັດຂຶ້ນ ແລະ ຢ້ຽມຊົມອັງກໍວັດ ເຊິ່ງເປັນສະຖານທີ່ສຳຄັນທາງປະຫວັດສາດ ແລະ ລືຊື່ແຫ່ງໜຶ່ງຂອງໂລກ ຢູ່ເມືອງຊຽມຣຽບ.



# ທາບທາມຮ່າງກົດໝາຍຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

(ສພຊ) - ກອງປະຊຸມທາບທາມຄຳຄິດຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ (ສະບັບປັບປຸງ) ເພື່ອເຮັດໃຫ້ເນື້ອໃນກົດໝາຍມີຄວາມຮັດກຸມ, ແທດເໝາະກັບສະພາບການຂະຫຍາຍຕົວຂອງສັງຄົມ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນໃນທົ່ວປະເທດ ໄດ້ຈັດຂຶ້ນເມື່ອວັນທີ 4 ພຶດສະພາ 2026 ທີ່ແຂວງຈຳປາສັກ ໂດຍການເປັນປະທານຂອງທ່ານດຣ. ວັນນະໄຊ ຊາດຕະກຸນ ຮອງລັດຖະມົນຕີກະຊວງສາທາລະນະສຸກ, ມີບັນດາຜູ້ຕາງໜ້າຈາກພະແນການ-ອົງການທີ່ກ່ຽວຂ້ອງ ເປັນຕົ້ນ: ສາທາລະນະສຸກ, ຍຸຕິທຳ, ການເງິນ, ອຸດສາຫະກຳ ແລະ ການຄ້າ, ປກສ, ຍທຂ, ວັດທະນະທຳ ແລະ ການທ່ອງທ່ຽວ, ສຶກສາທິການ ແລະ ກິລາ, ຄະນະໂຄສະນາອົບຮົມ, ສະພາການຄ້າ ແລະ ອຸດສາຫະກຳ ຈາກ 5 ແຂວງຄື: ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງແລະອັດຕະປື.



ທ່ານ ດຣ. ນາງ ມາລີ ໄຊຍະຈັກ ຮອງຫົວໜ້າພະແນກຄຸ້ມຄອງວຽກງານສົ່ງເສີມສຸຂະພາບ ໄດ້ນຳສະເໜີໂຄງຮ່າງແລະເນື້ອໃນສຳຄັນຂອງກົດໝາຍ ເພື່ອເປັນບ່ອນອີງໃຫ້ແກ່ການປະກອບຄຳເຫັນ ເຊິ່ງຈຸດສຸມຂອງການທາບທາມໃນຄັ້ງນີ້ປະກອບມີ: ໂຄງສ້າງກົດໝາຍ ກວມເອົາ 12 ພາກ ແລະ 85 ມາດຕາ ໂດຍເປົ້າໝາຍກໍເພື່ອປັບປຸງບັນດາມາດຕະການຄວບຄຸມໃຫ້ແທດເໝາະກັບຄວາມເປັນຈິງ, ຫຼຸດຜ່ອນຜົນກະທົບທາງລົບຈາກການບໍລິໂພກທາດເຫຼົ້າຕໍ່ສຸຂະພາບ ແລະ ສັງຄົມ; ສຳລັບການມີສ່ວນຮ່ວມແມ່ນເນັ້ນໃສ່ການປະສານງານລະຫວ່າງຂະແໜງການໃນການບັງຄັບໃຊ້ກົດໝາຍໃຫ້ມີຄວາມເຂັ້ມງວດ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ມີການແລກປ່ຽນຄຳຄິດເຫັນຢ່າງກົງໄປກົງມາ ແລະ ພ້ອມກັນສຸມໃສ່ຄົ້ນຄວ້າຕາມຄຳຖາມເຈາະຈີ້ມ ແລະ ພາລະບົດບາດຂອງແຕ່ລະພາກສ່ວນ ເຊິ່ງບັນດາຄຳເຫັນລ້ວນແຕ່ມີຄຸນຄ່າ ໂດຍຈະຖືກນຳໄປສັງລວມເພື່ອປັບປຸງຮ່າງກົດໝາຍດັ່ງກ່າວ ໃຫ້ມີຄວາມສົມບູນຄົບຖ້ວນ ກ່ອນຈະນຳສະເໜີຕໍ່ລັດຖະບານ ແລະ ສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງໃນຂັ້ນຕໍ່ໄປ.

ຮ່າງກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າສະບັບປັບປຸງ ມີມາດຕະການໃໝ່ຄື: ມາດຕະການດ້ານພາສີ: ສະເໜີປັບປຸງອັດຕາພາສີຊົມໃຊ້ (Excise Tax) ໃຫ້ສູງຂຶ້ນຕາມລະດັບຄວາມເຂັ້ມຂຸ້ນຂອງທາດເຫຼົ້າ ເພື່ອຫຼຸດຜ່ອນການເຂົ້າເຖິງຂອງກຸ່ມຊາວໜຸ່ມ, ການຄຸ້ມຄອງການຈຳໜ່າຍ: ກຳນົດໂມງເວລາຊື້-ຂາຍຢ່າງເຄັ່ງຄັດ ແລະ ຈຳກັດສື່ໂຄສະນາທີ່ດຶງດູດກຸ່ມສ່ຽງ, ການນຳໃຊ້ລາຍຮັບ: ຜັນຂະຫຍາຍອາກອນຈາກຜະລິດຕະພັນທາດເຫຼົ້າ ເພື່ອນຳມາໃຊ້ໃນການຍົກລະດັບວຽກງານສາທາລະນະສຸກໂດຍກົງ.



# ກອງປະຊຸມປຶກສາຫາລືຂອງ YPA ຄັ້ງທີ 3




(ສພຊ) - ວັນທີ 28 ເມສາ 2026, ຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ນາງ ມີນາ ສີວິໄລ ສະມາຊິກສະພາແຫ່ງຊາດ (ສສຊ), ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວແລະ ທ່ານ ໄຊປັນຍາ ພົມວິຫານ ສະມາຊິກສະພາແຫ່ງຊາດ ປະຈຳກຳມາທິການການຕ່າງປະເທດ ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລືຂອງສະມາຊິກລັດຖະສະພາໜຸ່ມຂອງສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (YPA) ຄັ້ງທີ 3 ໃນຮູບແບບທາງໄກ ເຊິ່ງເປັນເຈົ້າພາບຈັດຂຶ້ນໂດຍສະພາຜູ້ແທນປະຊາຊົນແຫ່ງ ສາທາລະນະລັດຟີລິບປິນ, ມີຄະນະຜູ້ແທນທີ່ເປັນສະມາຊິກລັດຖະສະພາໜຸ່ມຈາກສະມາຊິກສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ(AIPA), ກອງເລຂາ AIPA ແລະ ຊ່ຽວຊານທີ່ກ່ຽວຂ້ອງ ເຂົ້າຮ່ວມ 48 ທ່ານ; ໃນພິທີເປີດກອງປະຊຸມ, ໄດ້ຮັບກຽດກ່າວຕ້ອນຮັບໂດຍທ່ານ ນາງ ມາເຣຍ ຣາເຊວ "ເບບີ" ຈິມີເນຊ ອາເຣນາສ (Maria Rachel "Baby" Jimenez Arenas) ຮອງປະທານສະພາຜູ້ແທນປະຊາຊົນຟີລິບປິນ ແລະ ກ່າວເປີດກອງປະຊຸມຢ່າງເປັນທາງການໂດຍທ່ານ ເຟົາສຕິໂນ "ໂບຈີ" ເດີ ກຸຊມານ ດີ ທີ III (Faustino "Bojie" De Guzman Dy III) ປະທານສະພາຜູ້ແທນປະຊາຊົນຟີລິບປິນ ທັງເປັນປະທານ AIPA ຄັ້ງທີ 47.

ກອງປະຊຸມໄດ້ດຳເນີນໄປພາຍໃຕ້ການເປັນປະທານຂອງທ່ານ ໂຈນາທານ ຄລີເມນ "ເຈຊີ" ມີຣານດາ ອາບາລອສ ທີ II (Jonathan Clement "JC" Miranda Abalos II) ສະມາຊິກສະພາຜູ້ແທນປະຊາຊົນຟີລິບປິນ, ປະທານ YPA ປີ 2026. ໃນກອງປະຊຸມຄັ້ງນີ້, ຫົວໜ້າຄະນະຜູ້ແທນທີ່ເຂົ້າຮ່ວມໄດ້ຜັດປ່ຽນກັນມີຄຳເຫັນໃນຫົວຂໍ້ "ຊາວໜຸ່ມອາຊຽນ: ເສີມສ້າງຄວາມສາມັກຄີແລະຄວາມເຂັ້ມແຂງ ແກ່ຜູ້ນຳທີ່ມີຄວາມພ້ອມສຳລັບອະນາຄົດ"; ນອກຈາກນັ້ນ, ກອງປະຊຸມຍັງປຶກສາຫາລື ແລະ ແລກປ່ຽນກັນ ພາຍໃຕ້ສອງຫົວຂໍ້ທີ່ສຳຄັນຄື: 1) ການນຳໃຊ້ປັນຍາປະດິດ ແລະ ຄວາມຮູ້ດ້ານດິຈິຕອນ ສຳລັບຊາວໜຸ່ມອາຊຽນ ແລະ 2) ອຳນາດຂອງລັດຖະສະພາ ໃນການເສີມສ້າງການຄຸ້ມຄອງສຸຂະພາບຈິດ.

ໃນການເຂົ້າຮ່ວມກອງປະຊຸມ, ທ່ານ ນາງ ມີນາ ສີວິໄລ ຫົວໜ້າຄະນະຜູ້ແທນລາວ ໄດ້ມີຄຳເຫັນແລກປ່ຽນພາຍໃຕ້ຫົວຂໍ້ກອງປະຊຸມ ໂດຍທ່ານຍົກໃຫ້ເຫັນເຖິງສິ່ງທ້າທາຍໃນອາຊຽນ ແລະ ໂອກາດຂອງຊາວໜຸ່ມໃນການປະກອບສ່ວນຮັບມືກັບສິ່ງທ້າທາຍດັ່ງກ່າວ, ການສົ່ງເສີມ ແລະ ພັດທະນາຊາວໜຸ່ມຂອງ ສປປລາວ ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊາວໜຸ່ມ ແລະ ເຍົາວະຊົນ, ການສົ່ງເສີມໂຄງການແລກປ່ຽນຂອງຊາວໜຸ່ມ ເພື່ອຊຸກຍູ້ຄວາມເປັນຜູ້ນຳໃນການພັດທະນາປະເທດຊາດແລະການຮ່ວມມືໃນພາກພື້ນ; ພ້ອມທັງຍົກໃຫ້ເຫັນເຖິງບົດບາດຂອງສະພາແຫ່ງຊາດລາວ ໃນການສ້າງແລະປັບປຸງກົດໝາຍທີ່ສົ່ງເສີມການພັດທະນາຊັບພະຍາກອນມະນຸດ ແລະ ການໃຫ້ຄວາມສຳຄັນຕໍ່ຊາວໜຸ່ມ.ທ່ານຍັງໄດ້ແຈ້ງກ່ຽວກັບຜົນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ເມື່ອເດືອນກຸມພາຜ່ານມາ ທີ່ປະກອບມີ ສສຊ ໜຸ່ມ ຈຳນວນ 19 ທ່ານ ໃນຈຳນວນ ສສຊ ທັງໝົດ 175 ທ່ານ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ໜຸ່ມ ຈຳນວນ 265 ທ່ານ ໃນຈຳນວນ ສສຂ ທັງໝົດ 745 ທ່ານ, ໂດຍບັນດາທ່ານເຫຼົ່ານີ້ຈະເປັນຕົວແທນຂອງຊາວໜຸ່ມໃນການມີສ່ວນຮ່ວມດ້ານການກຳນົດນະໂຍບາຍ ແລະ ເປັນກະບອກສຽງຂອງຊາວໜຸ່ມໃນສະພາ ລວມໄປເຖິງການພົວພັນຮ່ວມມື, ແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານ ກັບສະມາຊິກລັດຖະສະພາໜຸ່ມປະເທດເພື່ອນມິດຕ່າງໆ. ໃນຕອນທ້າຍ, ທ່ານໄດ້ຮຽກຮ້ອງໃຫ້ສະມາຊິກລັດຖະສະພາໜຸ່ມ AIPA ສືບຕໍ່ຍົກສູງການຮ່ວມມື ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃນການປັບປຸງນະໂຍບາຍ ເພື່ອຊຸກຍູ້ໃຫ້ລັດຖະບານ ເພີ່ມທະວີການລົງທຶນໃສ່ດ້ານການສຶກສາແນໃສ່ຮັບປະກັນໃຫ້ຊາວໜຸ່ມ ສາມາດນຳໃຊ້ສັກກະຍາພາບສູງສຸດຂອງເຂົາເຈົ້າ ເພື່ອປະກອບສ່ວນເຂົ້າໃນການພັດທະນາໃນອະນາຄົດ.

ນອກຈາກນັ້ນ, ທ່ານ ໄຊປັນຍາ ພົມວິຫານ ຍັງໄດ້ມີຄຳເຫັນແລກປ່ຽນພາຍໃຕ້ຫົວຂໍ້: "ການນຳໃຊ້ປັນຍາປະດິດ ແລະ ຄວາມຮູ້ດ້ານດິຈິຕອນ ສຳລັບຊາວໜຸ່ມອາຊຽນ" ເຊິ່ງທ່ານຍົກໃຫ້ເຫັນບົດບາດຂອງສະພາແຫ່ງຊາດລາວ ໃນການຊຸກຍູ້ດ້ານນິຕິກຳ, ການຮຽນຮູ້ດ້ານດິຈິຕອນ ແລະ ການປັບຕົວຂອງແຮງງານ; ພ້ອມທັງຮຽກຮ້ອງໃຫ້ສະມາຊິກລັດຖະສະພາໜຸ່ມ AIPA ສົ່ງເສີມການຈັດຝຶກອົບຮົມສຳມະນາ ເພື່ອຫຼຸດຜ່ອນຊອງວ່າງການພັດທະນາ ແລະ ການນຳໃຊ້ປັນຍາປະດິດ ແລະ ດິຈິຕອນ ໃນປະເທດສະມາຊິກອາຊຽນ.

ຜົນຂອງການປຶກສາຫາລືຄັ້ງນີ້ ຈະຖືກນຳໄປສັງລວມສ້າງເປັນຮ່າງມະຕິ ເພື່ອສະເໜີເຂົ້າພິຈາລະນາໃນກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 47 ເຊິ່ງຈະຂຶ້ນໃນເດືອນຕຸລາ 2026 ທີ່ປະເທດຟີລິບປິນ.

# ກອງປະຊຸມຄັ້ງປະຖົມມະລຶກ ສພຂ ຄຳມ່ວນ




(ສພຂ) - ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ຊຸດທີ V ໄດ້ດຳເນີນຂຶ້ນໃນວັນທີ 28-29 ເມສານີ້ ທີ່ສະໂມສອນໃຫຍ່ 21 ມີນາຂອງແຂວງ ໂດຍການເປັນປະທານຂອງທ່ານ ໄຊຊະນະ ໂຄດພູທອນ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງຄຳມ່ວນ ຊຸດທີ V; ເຂົ້າຮ່ວມມີທ່ານ ໂພໄຊ ໄຊຍະສອນ ກຳມະການສູນກາງພັກ, ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການ-ສັງຄົມ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 12 ແຂວງ ຄຳມ່ວນ; ມີບັນດາການນຳພັກ-ລັດ, ອະດີດການນຳພັກ-ລັດຂອງແຂວງ, ສສຊ ປະຈຳເຂດເລືອກຕັ້ງທີ 12, ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ແລະ ບັນດາແຂກຖືກເຊີນເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຮອງເອົາຜົນສຳເລັດຂອງການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງ ສສຊ ຊຸດທີ X ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ແລະ ສສຂ ຄຳມ່ວນ ຊຸດທີ V; ດຳເນີນການເລືອກຕັ້ງ, ຮັບຮອງເອົາການແຕ່ງຕັ້ງ ແລະ ການສະເໜີແຕ່ງຕັ້ງບຸກຄະລາກອນນຳພາຄຸ້ມຄອງຂອງອົງການລັດຂັ້ນແຂວງ ເປັນຕົ້ນເລືອກຕັ້ງປະທານສະພາປະຊາຊົນຂັ້ນແຂວງ, ຮອງປະທານສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ; ຮັບຮອງເອົາການແຕ່ງຕັ້ງປະທານຄະນະກຳມະການ, ຫົວໜ້າຫ້ອງວ່າການສະພາປະຊາຊົນຂັ້ນແຂວງ; ຮັບຮອງເອົາການສະເໜີແຕ່ງຕັ້ງ ປະທານອົງການກວດກາລັດຂັ້ນແຂວງ-ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ ແລະ ຫົວໜ້າຫ້ອງການຄະນະກຳມະການສົ່ງເສີມ ແລະຄຸ້ມຄອງການລົງທຶນແຂວງ ແລະ ໄດ້ອອກເປັນ ມະຕິ ກອງປະຊຸມ ຈຳນວນ 12 ສະບັບ ຄື:

1) ມະຕິ ວ່າດ້ວຍການຮັບຮອງເອົາການເລືອກຕັ້ງປະທານສະພາປະຊາຊົນແຂວງຄຳມ່ວນ;

2) ມະຕິ ວ່າດ້ວຍການຮັບຮອງເອົາການເລືອກຕັ້ງຮອງປະທານສະພາປະຊາຊົນແຂວງຄຳມ່ວນ ແລະ ກຳມະການຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ;

3) ມະຕິ ວ່າດ້ວຍການຮັບຮອງເອົາກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງຄຳມ່ວນ, ການແຕ່ງຕັ້ງປະທານຄະນະກຳມະການ, ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງຄຳມ່ວນ;

4) ມະຕິ ວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງປະທານອົງການກວດກາລັດຂັ້ນແຂວງ;

5) ມະຕິ ວ່າດ້ວຍການຮັບຮອງເອົາການສະເໜີແຕ່ງຕັ້ງຫົວໜ້າຫ້ອງການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງເຊິ່ງແມ່ນກຳມະການຂອງຄະນະກຳມະການປົກຄອງແຂວງ;

6) ມະຕິ ວ່າດ້ວຍການຮັບຮອງ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ 5 ປີ (2026-2030) ຂອງແຂວງ;

7) ມະຕິ ວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030)ຂອງອົງການກວດສອບປະຈຳພາກພາງ 2;

8) ມະຕິ ວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດກາລັດຂັ້ນແຂວງ;

9) ມະຕິ ວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການໄອຍະການປະຊາຊົນແຂວງ;

10)ມະຕິວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນແຂວງ;

11)ມະຕິວ່າດ້ວຍການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ V;

12)ມະຕິວ່າດ້ວຍການຮັບຮອງເອົາແຜນການສ້າງ, ປັບປຸງ ແລະ ປະເມີນ ນິຕິກຳໃຕ້ກົດໝາຍ 5 ປີ (2026-2030) ຂອງແຂວງ.

**(ເອື້ອ ມະໂນສິງ)**

## ເປີດນຳໃຊ້..

(ຕໍ່ຈາກໜ້າ 1)

ອາລຸນໄຊ ສູນນະລາດ ກຳມະການສູນກາງພັກ, ເລຂາພັກແຂວງຈຳປາສັກ; ທ່ານ ສຸກສະຫວັນ ວິໄລວົງ ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ; ທ່ານ ສຸພາບ ທຳມະຮັກສາ ຮອງເລຂາພັກແຂວງ; ທ່ານ ສາຍທອງ ໄຊຍະວົງ ປະທານສະພາປະຊາຊົນແຂວງ; ມີຄະນະປະຈຳພັກແຂວງ, ການນຳກະຊວງ, ການນຳຂອງແຂວງ, ອະດີດພະນັກງານການນຳຂອງແຂວງ, ຕາງໜ້າບໍລິສັດວິຊາຄົມ ກໍ່ສ້າງຈຳກັດຜູ້ດຽວ, ຄະນະນຳ 9 ເມືອງ, ນະຄອນປາກເຊ, ແຂກເຊີນ ແລະ ແຂກຖືກເຊີນເຂົ້າຮ່ວມ.

ໃນພິທີໄດ້ຮັບຟັງການລາຍງານກ່ຽວກັບໂຄງການກໍ່ສ້າງຕໍ່ເຕີມຫ້ອງເຮັດວຽກ ແລະ ຫ້ອງປະຊຸມສະພາປະຊາຊົນແຂວງຈຳປາສັກເລີ່ມລົງມືກໍ່ສ້າງແຕ່ວັນທີ 9 ພຶດສະພາ 2025 ມາຮອດປະຈຸບັນໃຊ້ເວລາທັງໝົດ 11 ເດືອນ ຈຶ່ງສາມາດປະຕິບັດສຳເລັດ 100%; ໂຄງການຕໍ່ເຕີມຫ້ອງເຮັດວຽກ ແລະ ຫ້ອງປະຊຸມສະພາປະຊາຊົນແຂວງເປັນອາຄານ 2 ຊັ້ນ ຮູບແບບສະຖາປັດຕະຍະກຳລາວ, ຂະໜາດ ກວ້າງ 2 ສີມັດ, ຍາວ 35 ແມັດ, ສູງ 17,4 ແມັດ ແລະ ມີເນື້ອທີ່1.890 ຕາແມັດ; ມູນຄ່າກໍ່ສ້າງຂອງໂຄງການຈຳນວນ19.999.745.779ກີບ.

ຈາກນັ້ນ, ໄດ້ຮ່ວມຕັດແຖບຜ້າ, ລັ່ນຄ້ອງ 9 ບາດ ແລະ ປ່ອຍປຸ່ມເປົ້າ ເພື່ອເປັນນິມິດໝາຍທີ່ດີໃຫ້ແກ່ການເປີດນຳໃຊ້ອາຄານເຮັດວຽກແລະຫ້ອງປະຊຸມສະພາປະຊາຊົນແຂວງຈຳປາສັກ.

**(ເກດສະໜາ ແລະ ຈັນທະວີສັກ)**

# ກອງປະຊຸມຄັ້ງປະຖົມມະລຶກ ສພຂ ຈຳປາສັກ




(ສພຂ) - ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງຈຳປາສັກຊຸດທີV ໄດ້ດຳເນີນຂຶ້ນໃນວັນທີ22-24 ເມສາ2026 ພາຍໃຕ້ການເປັນປະທານທ່ານ ອາລຸນໄຊ ສູນນະລາດ ກຳມະການສູນກາງພັກ, ປະທານສະພາປະຊາຊົນແຂວງຈຳປາສັກ; ເຂົ້າຮ່ວມມີທ່ານ ສອນໄຊສີພັນດອນກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ; ທ່ານ ວິໄລວົງ ບຸດດາຄຳ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ມີບັນດາການນຳພັກ-ລັດຂັ້ນສູງ, ອາດີດການນຳພັກ-ລັດຂັ້ນສູງຂອງແຂວງ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງ (ສສຂ) ຈຳປາສັກ ຊຸດທີ V, ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X, ອະດີດ ສສຊ ຊຸດທີ IX, ອະດີດ ສສຂ ຊຸດທີ IV, ສະມາຊິກອົງການປົກຄອງແຂວງຈຳປາສັກ, ອົງການທຽບເທົ່າຂັ້ນແຂວງ ແລະ ບັນດາແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມ ໄດ້ຮັບຟັງການລາຍງານຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ກ່ຽວກັບຜົນຂອງການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງ ສສຂ ຊຸດທີ V ແລະ ພິຈາລະນາ ແລະ ຕົກລົງບັນຫາສຳຄັນຍຸດທະສາດຂອງແຂວງ ດັ່ງນີ້:

1. ເລືອກຕັ້ງ ແລະ ຮັບຮອງເອົາຕຳແໜ່ງສຳຄັນ ຂອງອົງການອຳນາດລັດຂັ້ນແຂວງ ເປັນຕົ້ນປະທານ, ຮອງປະທານ ແລະ ຄະນະປະຈຳສະພາປະຊາຊົນແຂວງ; ຮັບຮອງເອົາກົງຈັກການຈັດຕັ້ງ, ບັນດາປະທານຄະນະກຳມະການ ແລະ ຫ້ອງວ່າການສະພາປະຊາຊົນແຂວງ. ພ້ອມກັນນັ້ນ, ກອງປະຊຸມຍັງໄດ້ຮັບຮອງເອົາການແຕ່ງຕັ້ງປະທານສານປະຊາຊົນແຂວງ.

2. ຄົ້ນຄວ້າ ແລະ ຮັບຮອງເອົາ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 5 ປີ (2026-2030) ຂອງແຂວງຈຳປາສັກ.

3. ພິຈາລະນາ ແລະ ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສະພາປະຊາຊົນແຂວງ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການກວດສອບພາກໃຕ້ ແລະ ອົງການກວດກາລັດແຂວງ.

4. ຮັບຮອງເອົາແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ 5 ປີ ຂອງແຂວງຈຳປາສັກ ແລະ ຮັບຮອງເອົາການສ້າງຕັ້ງອົງການກາແດງແຂວງຈຳປາສັກ.

ພ້ອມນັ້ນ, ຍັງໄດ້ຈັດພິທີມອບຫຼຽນກາລະນຶກ 50 ປີ ສະພາແຫ່ງຊາດ ໃຫ້ແກ່ ສສຊ ປະຈຳເຂດເລືອກຕັ້ງ (ຊຸດທີ I-IX),ຮອງເລຂາພັກແຂວງ,ຮອງເຈົ້າແຂວງ ແລະ ຄະນະປະຈຳສະພາປະຊາຊົນແຂວງ (ຊຸດທີ III-IV) ຈຳນວນ 35 ທ່ານ ແລະ ມອບຫຼຽນກາລະນຶກໃຫ້ແກ່ ສສຂ ຊຸດທີ IV ຈຳນວນ 36 ທ່ານ.



# ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຂ ອັດຕະປື ຊຸດທີ V




(ສພຂ) - ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ ອັດຕະປື ຊຸດທີ V ໄດ້ດຳເນີນໃນວັນທີ 23-24 ເມສາ 2026, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ບຸນເຖິງ ດວງສະຫວັນ ກຳມະການສູນກາງພັກ, ເລຂາຄະນະພັກແຂວງ, ປະທານສະພາປະຊາຊົນແຂວງອັດຕະປື; ເຂົ້າຮ່ວມມີທ່ານ ພົ.ສຸລິໄຊ ພິຈິດ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ(ສສຊ) ຊຸດທີ X ເຂດເລືອກຕັ້ງທີ 17; ມີບັນດາທ່ານຄະນະກຳມະການປົກຄອງແຂວງ, ບັນດາທ່ານຫົວໜ້າພະແນກການ, ອົງການທຽບເທົ່າ, ບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ17, ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ແຂກຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ພິຈາລະນາແລະຮັບຮອງເອົາການເລືອກຕັ້ງຮັບຮອງເອົາທ່ານ ບຸນເຖິງ ດວງສະຫວັນ ກຳມະການສູນກາງພັກ, ເລຂາພັກແຂວງ ເປັນປະທານສະພາປະຊາຊົນແຂວງອັດຕະປື ຊຸດທີ V; ເລືອກຕັ້ງທ່ານ ພູວັນ ພົມມະຈັນ ຄະນະປະຈຳພັກແຂວງແລະທ່ານນາງ ອ່ອນໃສ ມຽງລາວັນ ກຳມະການພັກແຂວງ ເປັນຮອງປະທານທານສະປະຊາຊົນແຂວງອັດຕະປື ຊຸດທີ V; ເລືອກຕັ້ງກຳມະການຄະນະປະຈຳສະພາປະຊາຊົນແຂວງ ແລະ ແຕ່ງຕັ້ງໂຄງປະກອບກົງຈັກການຈັດຕັ້ງຂອງສະພາປະຊົນແຂວງ ຊຸດທີ V ດັ່ງນີ້: ທ່ານ ນາງ ແສງອາລຸນ ວົງສາທິການ ເປັນກຳມະການຄະນະປະຈຳສະພາປະຊາຊົນແຂວງ ແລະ ປະທານຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ; ທ່ານ ນາງ ຈັນທະລີ ສີສຸວົງ ກຳມະການຄະນະປະຈຳສະພາປະຊາຊົນແຂວງ ແລະ ປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ; ທ່ານ ນາງ ສຸກວິໄລ ວຽງໄຊ ກຳມະການຄະນະປະຈຳສະພາປະຊາຊົນແຂວງ ແລະ ປະທານຄະນະກຳມະການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ; ທ່ານ ພົງສະຫວັນ ພົມມະວົງ ກຳມະການຄະນະປະຈຳສະພາປະຊາຊົນແຂວງ ແລະ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ; ນອກນີ້, ຍັງຮັບຮອງເອົາການແຕ່ງຕັ້ງຮອງປະທານຄະນະກຳມະການ, ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ແລະ ສສຂ ປະຈຳການ.

ພ້ອມນັ້ນ, ຍັງໄດ້ພິຈາລະນາຮັບຮອງເອົາການແຕ່ງຕັ້ງທ່ານ ສຸວັນສີ ແກ້ວວິເສີດ ເປັນປະທານອົງການກວດກາລັດຂັ້ນແຂວງ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ; ພິຈະລະນາຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 5 ປີ ຂັ້ນແຂວງ (2026-2030) ຂອງແຂວງ; ພິຈະລະນາຮັບຮອງເອົາ ແຜນການເຄື່ອນໄຫວວຽກງານ 05 ປີ (2026-2030) ຂອງອົງການໄອຍະການປະຊາຊົນແຂວງ ພິຈະລະນາຮັບຮອງແຜນການເຄື່ອນໃຫວວຽກງານ 05 ປີ (2026-2030) ສານປະຊາຊົນແຂວງ; ພິຈະລະນາຮັບຮອງ ແຜນການເຄື່ອນໄຫວວຽກງານ 05 ປີ (2026-2030) ຂອງອົງການກວດກາລັດຂັ້ນແຂວງ; ພິຈະລະນາຮັບຮອງແຜນການເຄື່ອນໄຫວວຽກງານ 05 ປີ (2026-2030) ຂອງອົງການກວດສອບພາກໃຕ້; ພິຈະລະນາຮັບຮອງເອົາແຜນການເຄື່ອນໄຫວວຽກງານ 05 ປີ (2026-2030) ຂອງສະພາປະຊາຊົນແຂວງ; ພິຈະລະນາຮັບຮອງເອົາແຜນການສ້າງ ແລະປັບປຸງນິຕິກຳໃຕ້ກົດໝາຍ 05 ປີ ( 2026-2030) ຂອງສະພາປະຊາຊົນແຂວງ.




## ເຜີຍແຜ່...

(ຕໍ່ຈາກໜ້າ 1)

ປົກຄອງ, ເມືອງທ່າແຂກແຂວງຄຳມ່ວນ ໂດຍການເປັນປະທານຂອງທ່ານ ບຸນຈັນ ສີວົງພັນ ກຳມະການສູນກາງພັກ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ບັນດາທ່ານຮອງປະທານ ແລະ ຫົວໜ້າ-ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ 9 ແຂວງຄື: ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ, ອັດຕະປື ແລະ ໄຊສົມບູນ ພ້ອມດ້ວຍວິທະຍາກອນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ບຸນຈັນ ສີວົງພັນ ກ່າວວ່າ: ເນື້ອໃນທີ່ນຳມາຄົ້ນຄວ້າ, ປຶກສາຫາລືແລະປະກອບຄຳຄິດຄຳເຫັນໃນຄັ້ງນີ້ ລ້ວນແຕ່ເປັນນິຕິກຳທີ່ສຳຄັນ ແລະ ຈຳເປັນຫຼາຍ ເພາະເປັນໝາກຫົວໃຈສຳຄັນຂອງການປະຕິບັດໜ້າທີ່ເປັນຕົວແທນຂອງປະຊາຊົນລາວບັນດາເຜົ່າ ເພື່ອເກັບກຳ, ສັງລວມຄວາມຄິດຄວາມເຫັນຂອງປະຊາຊົນ ນຳໄປລາຍງານຕໍ່ພາກສ່ວນກ່ຽວຂ້ອງ ໄດ້ຮັບຮູ້ບັນຫາຕ່າງໆ, ກຳໄດ້ສະພາບຄວາມຂັດຂ້ອງໝອງໃຈຂອງປະຊາຊົນ ແລ້ວນຳໄປພິຈາລະນາແກ້ໄຂຢ່າງຖືກຕ້ອງ, ສອດຄ່ອງຕາມລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ໄດ້ກຳນົດຂັ້ນຕອນ, ຂະບວນການຕ່າງໆ ໃນການພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ເຊິ່ງເປັນບົດຮຽນທີ່ສຳຄັນ ໂດຍຜ່ານການທົດລອງຈັດຕັ້ງປະຕິບັດມາແລ້ວໃນຂອບເຂດທົ່ວປະເທດ ຈາກສະພາແຫ່ງຊາດ ຊຸດທີ IX ເພື່ອຮັບປະກັນການພົບປະປະຊາຊົນຂອງ ສສຊ ແລະ ສສຂ ກໍຄືການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ໃຫ້ມີປະສິດທິພາບແລະປະສິດທິຜົນດີຂຶ້ນເປັນກ້າວໆ.

ກອງປະຊຸມໄດ້ຮັບຟັງສະພາບລວມວຽກງານການພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງ), ການລົງເລິກພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ອີງໃສ່ປຶ້ມຄູ່ມືພົບປະປະຊາຊົນ ແລະ ການເຄື່ອນໄຫວວຽກງານຕົວຈິງ), ການໃຫ້ການສະໜັບສະໜູນວຽກງານພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບ, ສຸມສະຕິປັນຍາ ເຂົ້າໃນການແລກປ່ຽນຄຳຄິດເຫັນເພື່ອໃຫ້ເຂົ້າໃຈຢ່າງຈະແຈ້ງ ແລ້ວນຳໄປຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງຢ່າງປະດິດສ້າງ, ເໝາະສົມ ແລະ ສອດຄ່ອງກັບສະພາບຈຸດພິເສດຂອງແຕ່ລະແຂວງ.

**(ອານຸສອນ ພູມມີທອນ)**

ອາດ ກະວີລາວ

# ສຽງສະອື້ນຈາກແມ່

**# ລູກທາດສາມປາງ**

ລູກຫຼາຍຄືນແມ່ລ້ຽງ
ແມ່ຮັກຫອມສະເໜີຕາ
ຍາມລູກເຫງົາຫິວໄຫ້
ລູກປຽບດວງພະເນດເນື້ອ
ພຽນພໍ່າແພງຖະໜອມ
ຢູ່ຄອຍປະຄອງເຈົ້າ
ກັງວົນໃຈແມ່ເປັນຫ່ວງ
ສອງກໍ້າໜ່ອຍຕາ...ແມ່ນາ!

ພາລະໜັກໜ່ວງບ່າວ
ເຝົ້າເບິ່ງແຍງບຸດຕາ
ແມ່ບໍ່ພອຍຜາງໜ້າ
ນໍ້ານົມຫວານຕ່ອນຊື້ນ
ເທທັ່ງໂຫມມາ
ເມື່ອຍາມຍັງນ້ອຍ
ທາລະກາລູກອ່ອນ
ປາປ້ອນອີ່ມອອຍ

ຍາມລູກຫາວຍຫງ່ອມເສົ້າ
ຍາມລູກຄອນຄາງຂຶມ
ຍາມລູກແຄນເຄືອງໄຂ້
ແມ່ທົນທວຍກວ່າເຈົ້າ
ຄຽງອຸ່ນປະໂລມຂວັນ
ແມ່ຕົມຕາມແຄ້ນ
ຫວັດໄອເປັນປ່ວຍ
ຫຼາຍເທົ່າທັ່ງທວງ...ລູກເອີຍ!

ແມ່ຮັກຫວງຫ່ວງແກ້ວ
ແມ່ບໍ່ຫັນເຫເຫີນ
ເອົາຊີວິງປະຄອງຕຸ້ມ
ຄອຍດູແລລໍ່າລ້ຽງ
ແນວໜໍ່ຊີວາວັນ
ລ່ວງເກີນໄກເຈົ້າ
ຂວັນແພງແກ້ວແມ່
ສະເໜີໜ້າພໍ່ຕາ

ຍຸງບິນມາແມ່ປ້ອງ
ມົດບໍ່ມີມາຕອມ
ຂຸມໝູ່ແມງໄຂຮື້ນ
ແມ່ຄຽງກາຍນັ່ງເຝົ້າ
ມີໄລ່ຕົບໜີ
ແມ່ຊອມແຊມໃກ້
ເຫີນໜີບິນພ່າຍ
ອອຍເວົ້າອ່ອນຫວານ

ຫຼາຍປີນານໃຫຍ່ກ້າວ
ແມ່ຫ່ວງໃຍຍັງເດີມ
ຫາເງິນຊຸໜູນເຈົ້າ
ຫວັງໄດ້ພາເພິ່ງຊື້ນ
ເກີນແກ່ນຈະເລີນໄວ
ສົ່ງເສີມຮຽນຮູ້
ຮຽນສູງສົມໃຝ່
ຍາມເຖົ້າແກ່ຊະລາ...ນີ້ແລ້ວ!

ເງິນຄວ່າຫາສິ່ງໃຫ້
ແມ່ສູ້ທົນແພງອອມ
ເດີນດັ້ນແດນໄກໃກ້
ຫາເງິນຝົນຜ່າຮ້ອນ
ຂາຍໄກໂຮມແຮ
ທໍ່ໂຫມຫອມໄວ້
ຄອນກະບຸງຫາບກະຕ່າ
ໂຮມທ້ອນສິ່ງເຖິງ

ເຫີງນານເດີນຮອດບັ້ນ
ແມ່ຜົນພານຄວາມທຸກ
ອະນິດຈາຄວາມເສົ້າ
ຄີງຮ່າງເພຍອ່ອນລ້າ
ລູກຮໍ່າຮຽນຈົບ
ອັ່ງອຸກອຶນເອົ້າ
ມົນເມົານ້ອຍມິ່ງ
ຜະຫວາຮ້ອນຮໍ່າຮອນ...ແມ່ເດ!

ລູກຖ່າຍຖອນບ່າຍບ້ຽວ
ໄດ້ການງານເງິນສູງ
ລືມໜໍ່ແນວລົງໄດ້
ສຽງແມ່ຄອນນັ່ງສະອື້ນ
ປະປ່ຽວພອຍໄກ
ດຸ່ງລາເລີຍແລ້ວ
ເວໄວເບນປ່ຽງ
ຝົນກັ້ນອັ່ງລະທົມ

ປະແມ່ຂົມຂື່ນແຄ້ນ
ນໍ້າຕາໄຫຼລິນນອງ
ແນມຫາທອງຄໍາແກ້ວ
ລູກຊ່າງແປປ່ຽນປັ້ນ
ລະກໍາແກ່ນຊວງໃນ
ຫຼັ່ງລົງຮໍາແກ້ມ
ສາຍໃຈລູກແມ່
ລືມສິ້ນບໍ່ອ່າວຫາ...ແມ່ນໍ!

ດຽວນີ້...ແມ່ໂຮຍແຮງອ່ອນລ້າ
ເຖົ້າຊະລານອນໂຊມ
ຫຼືລືມຄຸນເຄີຍລ້ຽງ
ຕາແມ່ມົວມິດເມົ້າ
ຫຼັງກົ່ງຜົມຂາວ
ຈົ່ມນໍາຄອຍມື້
ຫາຍສູນສ້ຽງເປົ່າ
ເງົາແຈ່ງເບິ່ງບໍ່ເຫັນ...ລູກເອີຍ!

ວັນເວັນຄືນລ່ວງຂ້າມ
ໃຈໝົ່ນໝອງມົນຊາ
ກາຍອ່ອນເພຍພອມແຫ້ງ
ປະແມ່ຄອຍລໍ່າຄ້ອຍ
ໝູນປ່ຽນວຽນໄປ
ຫຼ່າເຫຼືອງນອນແລ້ງ
ບຸດຕາແພງລູກບໍ່ຮໍ່າ
ຫາຍຈ້ອຍບໍ່ຫ່ວງນໍາ...ແມ່ນໍ!

## ຮອງປະທານ...

(ຕໍ່ຈາກໜ້າ 1)

ແມ່ປະຊາຊົນ ເຂົ້າຮ່ວມ.

ພາຍຫຼັງເຜີຍແຜ່ຜົນສໍາເລັດຂອງສອງກອງປະຊຸມດັ່ງກ່າວແລ້ວ, ຄະນະຍັງໄດ້ເປີດໂອກາດໃຫ້ຜູ້ມີສິດເລືອກຕັ້ງ ມີຄໍາຄິດຄໍາເຫັນ ແລະ ຂໍ້ສະເໜີ ເປັນຕົ້ນ: ບັນຫາເສັ້ນທາງຂໍໃຫ້ຫຼວງໄດ້ສອງລະດູ ເຊິ່ງໃນໄລຍະລະດູຝົນ ແມ່ນມີຄວາມລໍາບາກຫຼາຍ, ປະຊາຊົນທຸກຍາກຂາດເຂີນ ເນື່ອງຈາກທໍາການຜະລິດບໍ່ໄດ້, ຂໍການກໍ່ສ້າງນໍ້າລິນເພື່ອໃຫ້ມີນໍ້າຊົມໃຊ້, ຂໍພະນັກງານວິຊາການຂະແໜງກະສິກໍາ ລົງປະຈໍາຢູ່ບ້ານ ເພື່ອຖ່າຍທອດຄວາມຮູ້ ແລະ ນໍາພາປະຊາຊົນທໍາການຜະລິດຕົວຈິງ, ຂໍໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສສຂ ລົງມາຢ້ຽມຢາມພໍ່ແມ່ປະຊາຊົນຢູ່ເລື້ອຍໆ ເພື່ອຈະໄດ້ເຫັນເຖິງຊີວິດການເປັນຢູ່ຂອງປະຊາຊົນ ແລະ ບັນຫາອື່ນໆ.

ຈາກນັ້ນ, ທ່ານຮອງປະທານສະພາແຫ່ງຊາດກໍໄດ້ມີຄໍາເຫັນໂອ້ລົມເຊິ່ງທ່ານຮຽກຮ້ອງໃຫ້ບັນດາທ່ານ ສສຊ ແລະ ສສຂ ທີ່ເປັນຕົວແທນຂອງແຂວງຂອງເມືອງ ເຊິ່ງເປັນກໍາລັງສໍາຄັນປະຈໍາຢູ່ທ້ອງຖິ່ນ ຈົ່ງເອົາໃຈໃສ່ໃນການເປັນຕົວແທນສິດ ແລະ ຜົນປະໂຫຍດຂອງປະຊາຊົນ, ຊ່ວຍເປັນຫູເປັນຕາໃຫ້ປະຊາຊົນຫາກຍັງມີບັນຫາໃດທີ່ຍັງຄົງຄ້າງ ຂໍໃຫ້ສືບຕໍ່ແກ້ໄຂໃຫ້ທັນເວລາ; ບັນດາສະມາຊິກພັກ-ພະນັກງານຈົ່ງກໍາແໜ້ນແນວທາງຂອງພັກ-ນະໂຍບາຍຂອງລັດ, ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດຂອງປະຊາຊົນ ໃຫ້ເຊື່ອໝັ້ນຕໍ່ການນໍາພາຂອງພັກ ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ ເຊິ່ງຈະນໍາພາຜົນປະໂຫຍດສູງສຸດມາສູ່ປະຊາຊົນລາວບັນດາເຜົ່າ; ຮຽກຮ້ອງໃຫ້ພໍ່ແມ່ປະຊາຊົນເຕົ້າໂຮມຄວາມສາມັກຄີ, ຮັກສາຄວາມສະຫງົບ, ຕ້ານ ແລະ ສະກັດກັ້ນບັນຫາຢາເສບຕິດ, ປາກົດການຫຍໍ້ທໍ້ ແລະ ພ້ອມກັນສ້າງເສດຖະກິດຄອບຄົວ ໃຫ້ສາມາດກຸ່ມຕົນເອງເພິ່ງຕົນເອງໄດ້ເທື່ອລະກ້າວ.

**(ກົງທະນູຄໍາ ພິພັດເສລີ)**



## ຫັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

✻ ວັນກໍາມະກອນສາກົນ 1 ພຶດສະພາທີ່ຜ່ານພົ້ນໄປ ແລະ ສະແດງຄວາມຊົມເຊີຍທີ່ໄດ້ເຫັນພິທີຈັດກິດຈະກໍາສະເຫຼີມສະຫຼອງວັນດັ່ງກ່າວຢ່າງຄຶກຄື້ນມ່ວນຊື່ນ ເພື່ອສະແດງເຖິງຄວາມຮູ້ບຸນຄຸນ ແລະ ຂອບໃຈຕໍ່ບັນພະບຸລຸດກໍາມະກອນທີ່ບ່າພາຍາດໄດ້ ປະຊາທິປະໄຕເຕັມສ່ວນ ມອບປະຊາທົ່ວດ້າວ ຈະເລີນກ້າວລື່ນຫຼັງ ຊົມດັ່ງຄໍາກ່າວຍ້ອງ ເຊິ່ງຊ່າລືຊາ ວ່າເປັນກະດູກສັນຫຼັງ ກໍ່ແປງເມືອງບ້ານ ໃຫ້ປະເທດຊາດນັ້ນ ຈະເລີນເຮືອງຮຸ່ງ ພັດທະນາດຸ່ງກ້າວ ມີສິດເທົ່າທຽມໂລກາ **ນັ້ນແລ້ວ!**

✻ ຕາມການຄາດຄະເນຂອງກົມອຸຕຸນິຍົມ ແລະ ອຸທົກກະສາດ ໃຫ້ຮູ້ວ່າ: ອາກາດຈະອົບເອົ້າຂຶ້ນຕື່ມໃນສອງສາມວັນຂ້າງໜ້າ ແລະ ອາດຈະມີຝົນລົງມາລະດັບຄ່ອຍຫາປານກາງຢູ່ບາງທ້ອງຖິ່ນ ຂໍໃຫ້ມີສະຕິຕັ້ງ ຕາມຕິດຂ່າວອຸທະພູມ ພີ່ນ້ອງເອີຍ! ເພາະອາດມີຝົນ-ລົມ ພາຍຸໝູນມາໃກ້ ເພາະບູຮານເຄີຍສອນສັ່ງ ຝົນຊິຕົກຟ້າສະຫວ່າງ ຝົນຊິຫ່າງຟ້າມືດມົ້ວ ສໍານວນເວົ້າອາດແມ່ນຈິງ **ໄດ່ເດີ!**

## ຊອບຍິ້ມ

**# ພົ້ງລຶ່ງ**

### ເລື່ອງ: ການທົດລອງ

ມີ ດຣ ຄົນໜຶ່ງກໍາລັງທົດລອງເລື່ອງ "ກົບ" ໂດຍສັ່ງໃຫ້ກົບໂດດ ກົບກໍໂດດ, ຕໍ່ມາລາວຕັດຂາກົບອອກໃຫ້ເຫຼືອຂາດຽວ ແລ້ວລາວກໍສັ່ງໃຫ້ກົບໂດດ ກົບກໍກະດືບໄດ້ແຕ່ໜ້ອຍດຽວ; ຈາກນັ້ນ, ລາວກໍຕັດສິນໃຈຂັ້ນຕອນສຸດທ້າຍ ຕັດຂາກົບທັງໝົດອອກ ແລ້ວສັ່ງກົບໂດດ ມັນກໍບໍ່ໂດດ. ລາວຈຶ່ງສະຫຼຸບຜົນການທົດລອງວ່າ: "ກົບ ເມື່ອຕັດຂາອອກ 4 ຂາ ຈະເຮັດໃຫ້ຫູໜວກ".



## ສຸພາສິດ-ຄະຕິເຕືອນໃຈ

**# ດອກຫຍ້າ**

"ຍິ່ງເວົ້າຫຼາຍເທົ່າໃດ ຍິ່ງຫ່າງໄກຄວາມເປັນຈິງ"

ລັດຖະສະພາຕ່າງປະເທດ

# ສະພາແຫ່ງຊາດຝຣັ່ງ ຜ່ານຮ່າງກົດໝາຍ ການສົ່ງຄືນຊັບສິນທາງວັດທະນະທຳ

(Xinhua) - ວັນພຸດທີ 6 ພຶດສະພານີ້, ສະພາແຫ່ງຊາດຝຣັ່ງ ອະນຸມັດຮ່າງກົດໝາຍວ່າດ້ວຍການສົ່ງຄືນຊັບສິນທາງວັດທະນະທຳທີ່ໄດ້ມາຢ່າງຜິດກົດໝາຍ ຫຼັງຈາກການອະພິປາຍຮອບໃໝ່; ສະພາຕ່ຳຜ່ານຮ່າງກົດໝາຍດ້ວຍຄະແນນສຽງເຫັນດີ 141 ສຽງ ແລະ ບໍ່ມີສຽງຄັດຄ້ານ, ເຖິງວ່າຈະມີຜູ້ເຂົ້າຮ່ວມປະຊຸມໜ້ອຍ ເມື່ອທຽບກັບຈຳນວນທັງໝົດ 577 ທີ່ນັ່ງຂອງສະພາແຫ່ງຊາດ.

ຮ່າງກົດໝາຍນີ້ ມີຈຸດປະສົງເພື່ອສ້າງຂອບກົດໝາຍທີ່ຊັດເຈນ ແລະ ງ່າຍຂຶ້ນ ສຳລັບການສົ່ງຄືນຊັບສິນທາງວັດທະນະທຳທີ່ປະເທດຝຣັ່ງໄດ້ມາໂດຍວິທີການທີ່ຜິດກົດໝາຍ ລວມທັງການປຸ້ນຈີ້, ການລັກຂະໂມຍ ແລະ ການຂາຍທີ່ດຳເນີນພາຍໃຕ້ການບີບບັງຄັບ ໂດຍມີຜົນບັງຄັບໃຊ້ກັບຊັບສິນທາງວັດທະນະທຳທີ່ໄດ້ມາລະຫວ່າງປີ 1815-1972, ຍົກເວັ້ນສິ່ງຂອງທາງທະຫານ ແລະ ວັດຖຸບູຮານບາງປະເພດ.

ພາຍໃຕ້ຫຼັກການຂອງຝຣັ່ງທີ່ຍຶດຖືມາຢ່າງຍາວນານ ເລື່ອງການຫ້າມໂອນກຳມະສິດສິ່ງຂອງສະສົມສາທາລະນະ, ວັດຖຸທາງວັດທະນະທຳໃນເມື່ອກ່ອນ ຈຶ່ງສາມາດສົ່ງຄືນປະເທດຕົ້ນກຳເນີດຂອງພວກເຂົາໄດ້ ໂດຍຜ່ານກົດໝາຍສະເພາະໃນແຕ່ລະກໍລະນີ ແລະ ໃນຈຳນວນທີ່ຈຳກັດເທົ່ານັ້ນ.

ສະພາສູງຝຣັ່ງ ໄດ້ຜ່ານຮ່າງກົດໝາຍສະບັບນີ້ຄັ້ງທຳອິດເມື່ອວັນທີ 29 ມັງກອນ ແລະ ສະພາແຫ່ງຊາດໄດ້ອະນຸມັດຮ່າງກົດໝາຍທີ່ແຕກຕ່າງກັນເລັກນ້ອຍເມື່ອວັນທີ13ເມສາດ້ວຍຄະແນນສຽງເຫັນດີ 170 ສຽງ ແລະ ບໍ່ມີສຽງຄັດຄ້ານ; ເນື່ອງຈາກຍັງມີຄວາມແຕກຕ່າງລະຫວ່າງສອງສະບັບ, ກຳມາທິການຮ່ວມທີ່ປະກອບດ້ວຍສະມາຊິກສະພາແຫ່ງຊາດ 7 ຄົນ ແລະ ສະມາຊິກສະພາສູງ 7 ຄົນ ຈຶ່ງໄດ້ເຮັດວຽກຮ່ວມກັນເພື່ອບັນລຸຄວາມເຫັນດີເປັນເອກະພາບລະຫວ່າງຂໍ້ກຳນົດທີ່ແຕກຕ່າງກັນ ແລະ ສະເໜີເນື້ອໃນທີ່ປະນີປະນອມເມື່ອວັນທີ 30 ເມສາ.

ພາຍໃຕ້ຂະບວນການນິຕິບັນຍັດຂອງຝຣັ່ງ, ຮ່າງກົດໝາຍສະບັບປັບປຸງ ຍັງຕ້ອງໄດ້ຮັບການອະນຸມັດຈາກສະພາສູງໃນການທົບທວນຄືນ ກ່ອນທີ່ຈະສາມາດດຳເນີນການປະກາດໃຊ້.



# Estonia ຜ່ານກົດໝາຍອຳນວຍຄວາມສະດວກ ການຈ້າງງານແຮງງານຕ່າງຊາດທີ່ມີທັກສະ




(Xinhua) - ລັດຖະສະພາແອັດສະໂຕນີ ຜ່ານກົດໝາຍເມື່ອວັນຈັນທີ 5 ພຶດສະພາຜ່ານມາ ໂດຍມີເປົ້າໝາຍເພື່ອອຳນວຍຄວາມສະດວກໃຫ້ແກ່ຂະບວນການນຳເອົາແຮງງານຕ່າງຊາດທີ່ມີທັກສະເຂົ້າມາໃນປະເທດ; ຮ່າງກົດໝາຍນີ້ ໄດ້ຂະຫຍາຍຂອບເຂດສິດຜົນປະໂຫຍດທີ່ມີໃຫ້ແກ່ພົນລະເມືອງຈາກປະເທດນອກສະຫະພາບເອີຣົບ/ເຂດເສດຖະກິດເອີຣົບ (non-EU/EEA) ທີ່ຖືໃບອະນຸຍາດພັກອາໄສ ແລະ ມີຈຸດປະສົງເພື່ອແກ້ໄຂບັນຫາການຂາດແຄນແຮງງານທີ່ມີທັກສະ ແລະ ມີຄຸນວຸດທິ ເຊິ່ງເປັນຊ່ອງວ່າງທີ່ສົ່ງຜົນກະທົບຕໍ່ຄວາມສາມາດໃນການແຂ່ງຂັນຂອງບໍລິສັດແອັດສະໂຕນີ ແລະ ການເຕີບໂຕທາງເສດຖະກິດທີ່ຊ້າລົງ.

ອີງຕາມການຄາດຄະເນຈາກອົງການຮັບຮອງຄຸນວຸດທິຂອງແອັດສະໂຕນີ, ປະເທດປະເຊີນກັບບັນຫາການຂາດ ແຄນ "ຜູ້ຊ່ຽວຊານລະດັບສູງ" ປະມານ 1,400 ຄົນຕໍ່ປີ ສ່ວນໃຫຍ່ແມ່ນຢູ່ໃນຂະແໜງໄອທີ, ພ້ອມກັບການຂາດແຄນແຮງງານທີ່ມີທັກສະອີກ 700 ຄົນ.

ການປ່ຽນແປງສຳຄັນທີ່ນຳສະເໜີໂດຍຮ່າງກົດໝາຍນີ້ ແມ່ນການປ່ຽນແທນຂໍ້ຍົກເວັ້ນການຈ້າງງານໄລຍະສັ້ນທີ່ມີຢູ່ແລ້ວ ດ້ວຍຂໍ້ຍົກເວັ້ນຕາມຂະແໜງການສຳລັບສາຂາທີ່ປະສົບກັບບັນຫາການຂາດແຄນແຮງງານ; ໃນຂະແໜງເຫຼົ່ານີ້, ຈະມີການອອກໃບອະນຸຍາດພັກອາໄສໄລຍະສັ້ນເພື່ອການຈ້າງງານພາຍໃຕ້ເງື່ອນໄຂທີ່ເອື້ອອຳນວຍຫຼາຍຂຶ້ນ.

ເມື່ອກົດໝາຍມີຜົນບັງຄັບໃຊ້, ໂກຕາສະເພາະຂະແໜງການ ຈະບໍ່ຖືກນຳໃຊ້ອີກຕໍ່ໄປ ແລະ ນາຍຈ້າງບໍ່ຈຳເປັນຕ້ອງຂໍອະນຸຍາດແຍກຕ່າງຫາກຈາກກອງທຶນປະກັນການວ່າງງານຂອງແອັດສະໂຕນີ.

ຂໍ້ມູນທີ່ເປີດເຜີຍໂດຍສຳນັກງານສະຖິຕິຂອງແອັດສະໂຕນີໃນເດືອນເມສາ ສະແດງໃຫ້ເຫັນວ່າປະຊາກອນທັງໝົດຂອງປະເທດ ຢູ່ທີ່ 1.36 ລ້ານຄົນ ມາຮອດວັນທີ 1 ມັງກອນ 2026, ໂກຕາການເຂົ້າເມືອງປະຈຳປີສຳລັບແຮງງານຕ່າງຊາດໃນປີ 2026 ແມ່ນກຳນົດໄວ້ທີ່ 1,292 ຄົນ.

# EU ພະຍາຍາມຍົກເວັ້ນໜັງ ອອກຈາກ ກົດໝາຍຕໍ່ຕ້ານການຕັດໄມ້ທຳລາຍປ່າ



(Xinhua) - ວັນຈັນທີ 4 ພຶດສະພາຜ່ານມາ, ຄະນະກຳມະການເອີຣົບ (European Commission - EC) ສະເໜີໃຫ້ຍົກເວັ້ນໜັງ ອອກຈາກຂອບເຂດຂອງກົດລະບຽບວ່າດ້ວຍການຕັດໄມ້ທຳລາຍປ່າຂອງສະຫະພາບເອີ ຣົບ (European Union Deforestation Regulation - EUDR) ສະບັບປັບປຸງ ເພື່ອຫຼີກລ່ຽງການລົງໂທດຜູ້ຜະລິດສິນຄ້າຂອງອີຢູເຊັ່ນ: ກະເປົາຖື ແລະ ເກີບ; ຮ່າງກົດໝາຍສະບັບນີ້ ເຊິ່ງເປີດໃຫ້ປະຊາຊົນສະແດງຄວາມຄິດເຫັນຈົນຮອດວັນທີ 1 ມິຖຸນາ ສະເໜີການປັບປຸງສະເພາະເຈາະຈົງໃນຂອບເຂດຂອງຜະລິດຕະພັນ ລວມທັງການເພີ່ມກາເຟສຳເລັດຮູບ ແລະ ອະນຸພັນນ້ຳມັນປາມບາງຊະນິດ (certain palm oil derivatives), ໃນຂະນະທີ່ຍົກເວັ້ນໜັງ ແລະ ຢາງລົດທີ່ນຳກັບມາໃຊ້ໃໝ່ ແລະ ອື່ນໆ.

ECຍັງໄດ້ເປີດເຜີຍມາດຕະການສະໜັບສະໜູນຕ່າງໆ ເພື່ອຮັບປະກັນການຈັດຕັ້ງປະຕິບັດກົດໝາຍສະບັບປັບປຸງຢ່າງລຽບງ່າຍ ແລະ ມີປະສິດທິພາບ ຫຼັງຈາກລັດຖະສະພາເອີຣົບ (European Parliament) ແລະ ສະພາຂອງສະຫະພາບເອີຣົບ (Council of the EU) ໄດ້ອະນຸມັດຮ່າງກົດໝາຍສະບັບປັບປຸງໃນເດືອນທັນວາ 2025.

ມາດຕະການດັ່ງກ່າວລວມມີບົດລາຍງານການທົບທວນຄືນການຫຼຸດຄວາມຊັບຊ້ອນ, ຄຳແນະນຳທີ່ປັບປຸງໃໝ່ ແລະ ຄຳຖາມທີ່ຖືກຖາມເລື້ອຍໆ; ມາດຕະການສະໜັບສະໜູນເຫຼົ່ານີ້ ຄາດວ່າຈະຊ່ວຍຫຼຸດຄ່າໃຊ້ຈ່າຍໃນການປະຕິບັດຕາມກົດລະບຽບປະຈຳປີສຳລັບບໍລິສັດຕ່າງໆທີ່ຢູ່ພາຍໃຕ້ຂໍ້ຜູກພັນຂອງ EUDR ປະມານ 75% ເມື່ອທຽບກັບກົດລະບຽບເດີມ.

ຄະນະກຳມະການກ່າວວ່າຊຸດດັ່ງກ່າວນີ້ຖືກອອກແບບມາເພື່ອໃຫ້ຄວາມຊັດເຈນຫຼາຍຂຶ້ນແກ່ຜູ້ປະກອບການທາງເສດຖະກິດ, ບັນດາປະເທດສະມາຊິກ ແລະ ປະເທດທີສາມ, ພ້ອມທັງຮັບປະກັນສະຖຽນລະພາບທາງກົດໝາຍ ແລະ ຄວາມສາມາດໃນການຄາດເດົາໄດ້.

EUDR ມີຈຸດປະສົງເພື່ອຮັບປະກັນວ່າສິນຄ້າສຳຄັນທີ່ຂາຍໃນຕະຫຼາດອີຢູ ຈະບໍ່ກໍ່ໃຫ້ເກີດການຕັດໄມ້ທຳ ລາຍປ່າ ແລະ ການເສື່ອມໂຊມຂອງປ່າໄມ້ ເຊິ່ງເປັນປັດໄຈສຳຄັນທີ່ກໍ່ໃຫ້ເກີດການປ່ຽນແປງສະພາບອາກາດ ແລະ ການສູນເສຍຄວາມຫຼາກຫຼາຍທາງຊີວະພາບ; ໂດຍກວມເອົາສິນຄ້າ 7 ປະເພດ ຄື: ງົວຄວາຍ, ໄມ້, ໂກໂກ້, ຖົ່ວເຫຼືອງ, ນ້ຳ ມັນປາມ, ກາເຟ, ຢາງພາລາ ແລະ ບາງຜະລິດຕະພັນທີ່ໄດ້ມາຈາກສິນຄ້າເຫຼົ່ານີ້.

ພາຍໃຕ້ກົດລະບຽບນີ້, ຜູ້ປະກອບການ ຫຼື ຜູ້ຄ້າ ທີ່ຂາຍສິນຄ້າເຫຼົ່ານີ້ໃນຕະຫຼາດ EU ຫຼື ສົ່ງອອກສິນຄ້າເຫຼົ່ານີ້ ຈະຕ້ອງພິສູດໄດ້ວ່າຜະລິດຕະພັນນັ້ນ ບໍ່ໄດ້ມາຈາກພື້ນທີ່ທີ່ຖືກຕັດໄມ້ທຳລາຍປ່າເມື່ອບໍ່ດົນມານີ້ ຫຼື ມີສ່ວນເຮັດໃຫ້ເກີດການເສື່ອມໂຊມຂອງປ່າໄມ້; ກົດລະບຽບນີ້ ຈະມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 30 ທັນວາ 2026 ສຳລັບບໍລິສັດຂະໜາດໃຫຍ່ ແລະ ຂະໜາດກາງ, ຕັ້ງແຕ່ວັນທີ 30 ມິຖຸນາ 2027 ສຳລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ອື່ນໆ.

# Tisza ຊະນະການເລືອກຕັ້ງສະພາແຫ່ງຊາດ ເອົາຊະນະພັກລັດຖະບານປະສົມຂອງ Orban




(Xinhua) - ພັກຝ່າຍຄ້ານ Tisza ຫຼື ພັກເຄົາລົບ ແລະ ເສລີພາບ (Respect and Freedom) ຂອງຮົງກາລີ ນຳໂດຍ ປີເຕີ ມາຈາຣ໌ (Peter Magyar) ເອົາຊະນະພັກລັດຖະບານປະສົມຂອງນາຍົກລັດຖະມົນຕີ ວິກເຕີ ອໍບານ (Viktor Orban) ໂດຍໄດ້ຮັບສຽງສ່ວນຫຼາຍໃນການເລືອກຕັ້ງສະພາແຫ່ງຊາດເມື່ອວັນອາທິດທີ 12 ເມສາຜ່ານມາ, ຕາມຜົນນັບຄະແນນເບື້ອງຕົ້ນທີ່ເຜີຍແຜ່ໂດຍສຳນັກງານການເລືອກຕັ້ງແຫ່ງຊາດ (National Election Office - NEO).

ເມື່ອນັບຄະແນນໄດ້ 98.89%, Tisza ໄດ້ຮັບຄະແນນສຽງ 53.21% ແລະ ຄາດວ່າຈະໄດ້ 138 ຈາກທັງໝົດ 199 ທີ່ນັ່ງ ເຊິ່ງເກີນເກນສອງສ່ວນສາມ, ພັກພັນທະມິດຂອງອໍບານ Fidesz-KDNP ຫຼື ພັນທະມິດແຫ່ງຄວາມສາມັກຄີຮົງກາຣີ (AllianceofHungarian Solidarity) ໄດ້ 38.26% ແລະ ຄາດວ່າຈະໄດ້ 55 ທີ່ນັ່ງ, ພັກຂວາຈັດ Our Homeland Movement (ຂະບວນການບ້ານເກີດຂອງເຮົາ) ໄດ້ 5.85% ແລະ ຄາດວ່າຈະໄດ້ 6 ທີ່ນັ່ງ, ພັກອື່ນໆ ບໍ່ສາມາດຜ່ານເກນ 5% ທີ່ກຳນົດໄວ້ສຳລັບທີ່ນັ່ງໃນສະພາແຫ່ງຊາດ.

ສະຖິຕິເບື້ອງຕົ້ນສະແດງໃຫ້ເຫັນວ່າມີຜູ້ມາໃຊ້ສິດເລືອກຕັ້ງປະມານ 77.8% ຂອງຜູ້ມີສິດເລືອກຕັ້ງປະມານ 8.1 ລ້ານຄົນ ເຊິ່ງສູງເປັນປະຫວັດການ.

ປະທານາທິບໍດີຮົງກາລີ ຕາມາສ ຊູລຢ໊ອກ (Tamas Sulyok) ໄດ້ສະແດງຄວາມຍິນດີກັບ "ພັກທີ່ຊະນະ ແລະ ຜູ້ໄດ້ຮັບເລືອກຕັ້ງທັງໝົດ" ຜ່ານທາງສື່ສັງຄົມອອນລາຍ.

ມາກຢາ ອາຍຸ 45 ປີ ກ່າວຄຳປາໄສຕໍ່ຜູ້ສະໜັບສະໜູນໃນນະຄອນຫຼວງບູດາເປສ (Budapest) ໂດຍຍ້ອງຍໍ "ໄຊຊະນະຢ່າງເດັດຂາດ" ຂອງພັກຕົນ ແລະ ກ່າວວ່ານີ້ແມ່ນໄຊຊະນະທີ່ເບິ່ງເຫັນໄດ້ "ຈາກທຸກປ່ອງຢ້ຽມຂອງຊາວຮົງກາລີ" ເຂົາກ່າວຕື່ມວ່າ ຮົງກາລີ ຈະກັບມາເປັນພັນທະມິດທີ່ເຂັ້ມແຂງໃນສະຫະພາບເອີຣົບ (EU) ແລະ NATO ອີກຄັ້ງ.

ອໍບານອາຍຸ 62 ປີຍອມຮັບຄວາມພ່າຍແພ້ "ຜົນການເລືອກຕັ້ງ, ເຖິງແມ່ນວ່າຍັງບໍ່ເປັນທີ່ສິ້ນສຸດ, ແຕ່ກໍຊັດເຈນ ແລະ ເຂົ້າໃຈໄດ້; ສຳລັບພວກເຮົາ, ມັນເປັນຄວາມເຈັບປວດ ແຕ່ບໍ່ມີຄວາມສົງໄສ" ເຂົາບອກກັບນັກຂ່າວ. "ພວກເຮົາບໍ່ໄດ້ຮັບຄວາມໄວ້ວາງໃຈ ແລະ ໂອກາດໃນການບໍລິຫານ, ຂ້າພະເຈົ້າຂໍສະແດງຄວາມຍິນດີກັບພັກທີ່ຊະນະ".

ໄຊຊະນະຂອງ Tisza ເຊິ່ງເປັນພັກຝ່າຍກາງຂວາ ເປັນສັນຍານເຖິງການສິ້ນສຸດຂອງອຳນາດ 16 ປີຕິດຕໍ່ກັນຂອງອໍບານ, ອໍບານ ດຳລົງຕຳແໜ່ງນາຍົກລັດຖະມົນຕີຕັ້ງແຕ່ປີ 1998-2002 ແລະ ຍັງຢູ່ໃນຕຳແໜ່ງນັບຕັ້ງແຕ່ກັບມາມີອຳນາດອີກຄັ້ງໃນປີ 2010.

ໃນລະຫວ່າງການໂຄສະນາຫາສຽງ, ພັກ Tisza ໄດ້ສຸມໃສ່ການຕໍ່ຕ້ານການສໍ້ລາດບັງຫຼວງ ແລະ ການປະຕິຮູບສະຖາບັນ ໂດຍຮຽກຮ້ອງໃຫ້ມີການຟື້ນຟູການປົກຄອງລັດດ້ວຍກົດໝາຍ ແລະ ການປົກຄອງທີ່ໂປ່ງໃສ; ນອກຈາກນີ້, ຍັງສະໜັບສະໜູນການຟື້ນຟູສາຍພົວພັນກັບສະຫະພາບເອີຣົບ ແລະ ຊຸກຍູ້ໃຫ້ຊາວຮົງກາລີຮ່ວມໃຈກັນໃນການສ້າງຮົງກາລີທີ່ມີອຳນາດອະທິປະໄຕ, ມີຄວາມເປັນພົນລະເມືອງ, ທັນສະໄໝແລະເປັນສ່ວນໜຶ່ງຂອງເອີຣົບ.

ພາຍໃຕ້ກົດໝາຍການເລືອກຕັ້ງຂອງຮົງກາລີ, ການເລືອກຕັ້ງສະພາແຫ່ງຊາດ ຈະຈັດຂຶ້ນທຸກໆສີ່ປີ, ສະພາແຫ່ງຊາດມີ 199 ທີ່ນັ່ງ, ປະກອບດ້ວຍ 106 ທີ່ນັ່ງທີ່ຖືກເລືອກຕັ້ງໂດຍກົງຈາກເຂດເລືອກຕັ້ງທີ່ມີສະມາຊິກຄົນດຽວ ແລະ 93 ທີ່ນັ່ງທີ່ຈັດສັນໃຫ້ພັກການເມືອງທີ່ຖືກເລືອກຕັ້ງເຂົ້າສູ່ສະພາແຫ່ງຊາດ.

ຜູ້ນຳເອີຣົບຫຼາຍຄົນສະແດງຄວາມຍິນດີກັບໄຊຊະນະໃນການເລືອກຕັ້ງຂອງ ມາກຢາ ແລະ ສະແດງຄວາມຄາດຫວັງເຖິງການຮ່ວມມືທີ່ໃກ້ຊິດກວ່າເກົ່າ ແລະ ການມີສ່ວນຮ່ວມຂອງຮົງກາລີກັບເອີຣົບອີກຄັ້ງ.

ປະທານຄະນະກຳມະການເອີຣົບ ນາງ ອູຊູລາ ຟອນເດີ ເລເຢນ (Ursula von der Leyen) ແລະ ປະທານລັດຖະສະພາເອີຣົບ ນາງ ໂຣເບີຕາ ເມດໂຊລາ (Roberta Metsola) ສະແດງຄວາມຍິນດີກັບ ມາກຢາ ໂດຍກ່າວວ່າ ຮົງກາລີ ໄດ້ "ເລືອກເອີຣົບ" ແລະ "ຢູ່ໃຈກາງເອີຣົບ".

ປະທານສະພາເອີຣົບອັນໂຕນິໂອ ຄອສຕາ (Antonio Costa) ກ່າວວ່າ "ຈຳນວນຜູ້ມາໃຊ້ສິດເລືອກຕັ້ງທີ່ສູງເປັນປະຫວັດການ" ຂອງຮົງກາລີ ສະທ້ອນໃຫ້ເຫັນເຖິງຈິດໃຈແຫ່ງປະຊາທິປະໄຕ ແລະ ສະແດງຄວາມພ້ອມທີ່ຈະເຮັດວຽກຢ່າງໃກ້ຊິດກັບຜູ້ນຳຊຸດໃໝ່ ເພື່ອເຮັດໃຫ້ເອີຣົບເຂັ້ມແຂງ ແລະ ຈະເລີນຮຸ່ງເຮືອງຍິ່ງຂຶ້ນ.

# ສະພາແຫ່ງຊາດ Azerbaijan ລະງັບການພົວພັນກັບ EP ຍ້ອນ "ກິດຈະກຳຕ້ານອາແຊກໄບຊານ"




(Xinhua) - ວັນສຸກທີ 1 ພຶດສະພາຜ່ານມາ, ສະພາແຫ່ງຊາດອາແຊກໄບຊານ ລົງຄະແນນສຽງໃຫ້ລະງັບການຮ່ວມມືທັງໝົດກັບລັດຖະສະພາເອີຣົບ (EP), ເຊິ່ງເປັນມາດຕະການທີ່ອາແຊກໄບຊານອະທິບາຍວ່າເປັນການຕອບໂຕ້ຕໍ່ "ກິດຈະກຳຕໍ່ຕ້ານອາແຊກໄບຊານ" ໂດຍສະພານິຕິບັນຍັດຂອງກຸ່ມປະເທດເອີຣົບ.

ສະພາແຫ່ງຊາດ ໄດ້ຜ່ານມະຕິຢຸດຕິການຮ່ວມມືທຸກດ້ານກັບລັດຖະສະພາເອີຣົບແລະຢຸດຕິການເຂົ້າຮ່ວມໃນກຳມາທິການການຮ່ວມມືລັດຖະສະພາລະຫວ່າງສະຫະພາບເອີຣົບ (EU) ກັບ ອາແຊກໄບຊານ.

ໃນການເປີດກອງປະຊຸມລະດູໃບໄມ້ປົ່ງ, ປະທານສະພາແຫ່ງຊາດ ຊາຮິບາ ກາຟາໂຣວາ (Sahiba Gafarova) ປະກາດວ່າ ສະພາຈະໃຊ້ມາດຕະການຕອບໂຕ້ຕໍ່ສິ່ງທີ່ນາງຮຽກວ່າກິດຈະກຳຕໍ່ຕ້ານອາແຊກໄບຊານ ໂດຍລັດຖະສະພາເອີຣົບ.

ໃນຂະນະດຽວກັນ, ສະພານິຕິບັນຍັດ ໄດ້ເລີ່ມຕົ້ນຂະບວນການຖອນຕົວອອກຈາກ EuroNest Parliamentary Assembly ເຊິ່ງເປັນເວທີປາໄສລະຫວ່າງລັດຖະສະພາພາກພື້ນທີ່ມີ EP ແລະ ລັດຖະສະພາຂອງອີກຫຼາຍປະເທດເຂົ້າຮ່ວມ.

ກ່ອນໜ້ານີ້, ກະຊວງການຕ່າງປະເທດຂອງອາແຊກໄບຊານ ໄດ້ຮຽກຕົວນາງ ມາຣີຢານາ ຄູຈຸນຊິກ (Marijana Kujundzic) ເອກອັກຄະລັດຖະທູດ EU ປະຈຳອາແຊກໄບຊານ ແລະ ປະທ້ວງມະຕິຂອງ EP ທີ່ຮັບຮອງເມື່ອວັນພະຫັດ, ເຊິ່ງອາແຊກໄບຊານລະບຸວ່າມີບັນດາຂໍ້ກຳນົດທີ່ບໍ່ມີຫຼັກຖານ ແລະ ມີອະຄະຕິຕໍ່ປະເທດຂອງຕົນ.

ເລຂາທິການໃຫຍ່ NATO ມາກ ຣຸດເຕ (Mark Rutte) ກໍໄດ້ສະແດງຄວາມຍິນດີເຊັ່ນກັນຕາມທີ່ມາກຢາກ່າວ.

ນາຍົກລັດຖະມົນຕີອັງກິດ ເຄຍ ສະຕາເມີ (Keir Starmer) ຮຽກຜົນການເລືອກຕັ້ງຄັ້ງນີ້ວ່າ "ຊ່ວງເວລາປະຫວັດສາດ" ສຳລັບທັງຮົງກາລີ ແລະ ປະຊາທິປະໄຕຂອງເອີຣົບ, ໂດຍສະແດງຄວາມຫວັງທີ່ຈະເຮັດວຽກຮ່ວມກັບຮົງກາລີ ເພື່ອຄວາມໝັ້ນຄົງ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນ.

ປະທານາທິບໍດີຝຣັ່ງ ເອັມມານູເອວ ມາຄຣົງ (Emmanuel Macron) ກ່າວວ່າ ຝຣັ່ງ ຍິນດີກັບການທີ່ປະຊາຊົນຮົງກາລີ ມຸ່ງໝັ້ນຕໍ່ຄຸນຄ່າຂອງສະຫະພາບເອີຣົບ ແລະ ຮົງກາລີ ມຸ່ງໝັ້ນຕໍ່ເອີຣົບ, ໂດຍກ່າວວ່າ "ຂໍໃຫ້ພວກເຮົາສ້າງເອີຣົບທີ່ມີອຳນາດອະທິປະໄຕຫຼາຍຂຶ້ນເພື່ອຄວາມໝັ້ນຄົງຂອງທະວີບ, ຄວາມສາມາດໃນການແຂ່ງຂັນ ແລະ ປະຊາທິປະໄຕຂອງພວກເຮົາ".

ນາຍົກລັດຖະມົນຕີເຢຍລະມັນ ຟຣີດຣິກ ເມີຊ໌ (Friedrich Merz) ກ່າວວ່າ ເຂົາໄດ້ສົນທະນາທາງໂທລະສັບກັບ ມາກຢາ ແລະ ພ້ອມທີ່ຈະຮ່ວມມືກັນເພື່ອ "ເອີຣົບທີ່ເຂັ້ມແຂງ, ໝັ້ນຄົງ ແລະເໜືອສິ່ງອື່ນໃດ ເປັນເອກະພາບ".

ນາຍົກລັດຖະມົນຕີນອກແວ ໂຈນາສ ກາ ສະໂຕເຣ (Jonas Gahr Store) ກ່າວວ່າ ຜົນໄດ້ຮັບນີ້ ມີຄວາມສຳຄັນຍິ່ງຕໍ່ເອີຣົບ ແລະ ສະແດງຄວາມຫວັງສຳລັບການຮ່ວມມືຢ່າງໃກ້ຊິດ ແລະ ສ້າງສັນກັບຮົງກາລີໃນການສົ່ງເສີມສັນຕິພາບແລະສະຖຽນລະພາບ, ປະຊາທິປະໄຕ ແລະການປົກຄອງລັດດ້ວຍກົດໝາຍ.

ວິເສດ ສະແຫວງສຶກສາ

# ເຮັດວຽກຢູ່ເຮືອນ ບໍ່ສະທ້ອນເລື່ອງນ້ຳມັນ

ເລື່ອງທີ່ເປັນກະແສມາແຮງກວ່າລົມມິດຕັດ-ມິດແຖ ຢູ່ລາວເຮົາໃນປັດຈຸບັນ (ລວມທັງເຫຼົ່າປະເທດນຳເຂົ້ານ້ຳມັນ) ກໍຄືງບໍ່ພົ້ນເລື່ອງນະໂຍບາຍໃຫ້ພະນັກງານເຮັດວຽກຢູ່ກັບເຮືອນ ຫຼື ເອີ້ນອີກຢ່າງໜຶ່ງວ່າ ເຮັດວຽກທາງໄກ, ເລື່ອງເຮັດວຽກຢູ່ເຮືອນນີ້ ໄດ້ກາຍເປັນຂ່າວໃຫຍ່ໃນຊຸມປີຫຼັງໆມານີ້ ໂດຍສະເພາະແມ່ນໃນໄລຍະການລະບາດຂອງພະຍາດໂຄວິດ-19ເຊິ່ງນະໂຍບາຍໃຫ້ພະນັກງານເຮັດວຽກຢູ່ເຮືອນນັ້ນ ກໍແມ່ນເພື່ອຈຳກັດການແຜ່ລະບາດຂອງພະຍາດມໍລະນະດັ່ງກ່າວ; ນອກຈາກນັ້ນ, ຫຼາຍປະເທດຍັງໄດ້ນຳໃຊ້ນະໂຍບາຍໃຫ້ພະນັກງານເຮັດວຽກຢູ່ເຮືອນເພື່ອຫຼຸດຜ່ອນສະພາບຈະລາຈອນຕິດຂັດ ຍ້ອນຈຳນວນລົດທີ່ແລ່ນຕາມເສັ້ນທາງ. ການເຮັດວຽກສຳລັບຢູ່ຍີ່ປຸ່ນ ນະໂຍບາຍໃຫ້ພະນັກງານເຮັດວຽກຢູ່ເຮືອນ (Working From Home-WFH) ແບບສະໝັກໃຈ ໄດ້ເລີ່ມມາແຕ່ປີ 2017 ເຊິ່ງເປັນໄລຍະເລີ່ມຕົ້ນແຜນກະກຽມເປັນເຈົ້າພາບມະຫະກຳກິລາໂອລິມປິກ ໂຕກຽວ-2020 (ແຕ່ເລື່ອນມາຈັດໃນປີ 2021) ຕົ້ນຕໍແມ່ນເພື່ອຫຼຸດຜ່ອນບັນຫາຈະລາຈອນຕິດຂັດ; ທາງການຍີ່ປຸ່ນ ໝາຍໝັ້ນເຮັດໃຫ້ WFH ກາຍເປັນປະເພນີໃໝ່ ເພື່ອປົດປ່ອຍພະນັກງານອອກຈາກສະພາບຟ້າວຟັ່ງເຮັ່ງຮີບ, ບຽດແຫຍ້ກັນຂຶ້ນລົດ ຫຼື ນັ່ງອິດເມື່ອຍຢູ່ຫຼັງພວງມາໄລລົດ. ຂ່າວບອກວ່າ ພຽງແຕ່ໄລຍະເລີ່ມຕົ້ນເທົ່ານັ້ນ ກໍໄດ້ມີຜູ້ເຂົ້າຮ່ວມໂຄງການເຮັດວຽກຢູ່ເຮືອນປະມານ 60,000 ຄົນ ໃນທົ່ວຍີ່ປຸ່ນ.

ຜູ້ຂຽນເຊື່ອວ່າ ທິດທາງສົ່ງເສີມໃຫ້ພະນັກງານເຮັດວຽກຢູ່ກັບເຮືອນ ເໝາະສົມກັບບ້ານເຮົາໃນໄລຍະນີ້ ແລະ ຕໍ່ໜ້າ, ບໍ່ພຽງແຕ່ເລື່ອງແກ້ໄຂບັນຫານ້ຳມັນຂາດແຄນ ແຕ່ຍັງຈະມີຜົນປະໂຫຍດອື່ນໆຕາມມາ, ຂໍແຕ່ຕ້ອງເປັນເຈົ້າຕົນເອງ ແລະ ຕ້ອງມີລະບົບຕິດຕາມກວດກາຄັກແນ່; ຢູ່ກັບເຮືອນຍັງເຮັດໃຫ້ຄອບຄົວຜົວ-ເມຍ ໄດ້ມີໂອກາດເບິ່ງແຍງລູກເຕົ້າ ແລະ ເຮັດວຽກເຮືອນຊ່ວຍກັນ. ປະໂຫຍດອື່ນໆທີ່ໄດ້ຮັບຈາກນະໂຍບາຍດັ່ງກ່າວ ກໍຄືການປະຢັດພະລັງງານໄຟຟ້າ ເພາະຢູ່ຫ້ອງການນັ້ນ ຈຳເປັນຕ້ອງໄດ້ໃຊ້ແອເຢັນແບບສິ້ນເປືອງ; ນອກນັ້ນ, ຍັງເປືອງເຄື່ອງນຸ່ງ-ເຄື່ອງແບບທາງການ, ບາງສຳນັກງານກໍຕ້ອງນຸ່ງຊຸດໃຫຍ່ມັດກາລະວັດ, ຖ້າເຮັດວຽກຢູ່ເຮືອນ ກໍນຸ່ງຖືທຳມະດາແບບເບົາບາງ ບໍ່ຈຳເປັນແອເຢັນຕະຫຼອດ. ນີ້ລະຄືປະໂຫຍດຂອງການເຮັດວຽກຢູ່ເຮືອນ ມັນປະຢັດໄດ້ຫຼາຍແນວ; ແຕ່ສຳຄັນທີ່ສຸດການເຮັດວຽກຢູ່ເຮືອນນັ້ນ ຕ້ອງມີລະບົບລະບຽບຄັກແນ່, ຕ້ອງເປັນເຈົ້າຕົນເອງ ເພາະຢູ່ເຮືອນມີແນວລົບກວນສະມາທິ, ບໍ່ມີຜູ້ບັນຊາ, ຕ້ອງຮູ້ບັນຊາຕົນເອງ.




#ບ່າວກະບື

**ເມຍ:** "ແນວໃດອ້າຍຈຶ່ງວ່າເລກ 12 ນັ້ນເປັນເລກຊວຍສຳລັບອ້າຍ?"

**ຜົວ:** "ກໍເພາະວ່າ ເມື່ອ 12 ປີ ກ່ອນນັ້ນອ້າຍແຕ່ງດອງກັບນ້ອງໃນວັນທີ 12 ເດືອນ 12"

#BAOKBU

**WIFE:** "How can you say that number 12 is unlucky for you?"

**HUSBAND:** "Because 12 years ago I got married to you on the 12th of December"

## ປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນບ່າຍວັນທີ 6 ພຶດສະພານີ້, ທ່ານ ໂພໄຊ ໄຊຄຳພິທູນ ປະທານກຳມາທິການການຕ່າງປະເທດ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທ່ານ ນາງ ຄຣອງຂະນິດ ຣັກຈະເລີນ ໃນໂອກາດທີ່ມາປະຕິບັດໜ້າທີ່ເປັນເອກອັກຄະລັດຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງລາຊະອານາຈັກໄທ ຜູ້ໃໝ່ ປະຈຳ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ທ່ານ ໂພໄຊ ໄຊຄຳພິທູນ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຊົມເຊີຍທ່ານ ນາງ ຄຣອງຂະນິດ ຣັກຈະເລີນ ທີ່ໄດ້ຖືກແຕ່ງຕັ້ງມາປະຕິບັດໜ້າທີ່ຢູ່ ສປປລາວ; ພ້ອມທັງແຈ້ງສະພາບການເຄື່ອນໄຫວວຽກງານ ໂດຍສະເພາະການປັບປຸງກົງຈັກການຈັດຕັ້ງຂອງສະພາແຫ່ງຊາດລາວ ຊຸດທີ X ແລະ ຍັງໄດ້ປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນກ່ຽວກັບແຜນການພົວພັນຮ່ວມມືໃນຕໍ່ໜ້າລະຫວ່າງສະພາແຫ່ງຊາດລາວ ກັບ ລັດຖະສະພາໄທ. ນອກຈາກນີ້, ປະທານກຳມາທິການການຕ່າງປະເທດຍັງໄດ້ສະແດງຄວາມຂອບໃຈຕໍ່ກັບການສະໜັບສະໜູນຊ່ວຍເຫຼືອຂອງປະເທດໄທໃນໄລຍະຜ່ານມາ ໃຫ້ແກ່ ສປປລາວ ເປັນຕົ້ນແມ່ນວຽກງານການສຶກສາ, ສາທາລະນະສຸກ ແລະ ກະສິກຳ ກໍຄືສະຖານທູດ ທີ່ເປັນຂົວຕໍ່ອັນສຳຄັນໃນການຮັດແໜ້ນສາຍພົວພັນຮ່ວມມືທີ່ດີງາມ ແລະ ການເປັນຄູ່ຮ່ວມຍຸດທະສາດເພື່ອການຈະເລີນເຕີບໂຕ ແລະ ການພັດທະນາແບບຍືນຍົງ ລະຫວ່າງສອງປະເທດ ໃຫ້ໄດ້ຮັບຜົນສຳເລັດໃນໄລຍະຜ່ານມາ.

ທ່ານເອກອັກຄະລັດຊະທູດ ໄດ້ສະແດງຄວາມຂອບໃຈຕໍ່ທ່ານປະທານກຳມາທິການການຕ່າງປະເທດ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ຈະສືບຕໍ່ຊຸກຍູ້ການຮ່ວມມືລະຫວ່າງສອງປະເທດ ໃຫ້ເຂົ້າສູ່ລວງເລິກຍິ່ງໆຂຶ້ນເວົ້າລວມ, ເວົ້າສະເພາະກໍຄືການພົວພັນຮ່ວມມືລະຫວ່າງລັດຖະສະພາໄທ ກັບ ສະພາແຫ່ງຊາດລາວ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ.

## ກົນໄກ...

(ຕໍ່ຈາກໜ້າ 1)

ສ້າງຊາດ (ສນຊ) ໃນນັ້ນ ໄດ້ຮ່ວມກັນປັບປຸງກົນໄກປະສານງານລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະປະຈຳສູນກາງແນວລາວສ້າງຊາດ ໂດຍສະເພາະການປັບປຸງຂໍ້ຕົກລົງວ່າດ້ວຍການພົວພັນລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ຄະນະປະຈຳສູນກາງແນວລາວສ້າງ, ປະສານສົມທົບການກະກຽມກອງປະຊຸມຮ່ວມລະຫວ່າງ ຄປຈສພຊ ກັບ ຄະນະປະຈຳ ສນຊ ແລະ ບັນດາອົງການຈັດຕັ້ງມະຫາຊົນຂັ້ນສູນກາງປະຈຳແຕ່ລະປີ, ປະສານສົມທົບການກະກຽມບົດປະກອບຄຳເຫັນຂອງອົງການແນວລາວສ້າງຊາດ ແລະບັນດາອົງການພາຄີຕໍ່ການເຄື່ອນໄຫວຂອງ ສພຊ ໃນກອງປະຊຸມສະໄໝສາມັນປະຈຳປີຂອງສະພາແຫ່ງຊາດ, ຈັດຕັ້ງກອງປະຊຸມສຳມະນາກົນໄກປະສານງານຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍກົນໄກການປະສານງານລະຫວ່າງກຳມາທິການບັນດາເຜົ່າ ກັບ ບັນດາກະຊວງ-ອົງການທີ່ກ່ຽວຂ້ອງ ແລະ ຈັດຕັ້ງກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການພົວພັນລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ຄະນະປະຈຳສູນກາງແນວລາວສ້າງຊາດ; ນອກນັ້ນ, ຍັງໄດ້ຈັດຕັ້ງຄະນະວິຊາການຂອງກຳມາທິການບັນດາເຜົ່າ ລົງເຄື່ອນໄຫວເຮັດວຽກ ແລະ ຈັດກອງປະຊຸມປຶກສາຫາລືການພົວພັນປະສານງານກັບສູນກາງແນວລາວສ້າງຊາດແລະບັນດາອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ເຊັ່ນ: ຜົບປະ ແລະ ປຶກສາຫາລືກັບ ສນຊ ກ່ຽວກັບການເຜີຍແຜ່ຊື່ເອີ້ນຊົນເຜົ່າ ແລະ ການແກ້ໄຂປາກົດການຫຍໍ້ທໍ້ທາງສາສະໜາ, ປຶກສາຫາລືກັບສູນກາງສະຫະພັນກຳມະບານລາວ ກ່ຽວກັບບັນຫາແຮງງານ ແລະບົດບາດຂອງສະຫະພັນກຳມະບານໃນຫົວໜ່ວຍທຸລະກິດ, ປຶກສາຫາລືກັບສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ກ່ຽວກັບການມີສ່ວນຮ່ວມຂອງອົງການຊາວໜຸ່ມ ຕໍ່ການແກ້ໄຂບັນຫາຢາເສບຕິດໃນກຸ່ມຊາວໜຸ່ມ-ເຍົາວະຊົນ ແລະ ປຶກສາຫາລືກັບສູນກາງສະຫະພັນແມ່ຍິງລາວ ກ່ຽວກັບການແກ້ໄຂບັນຫາການແຕ່ງງານກັບຄົນຕ່າງປະເທດແບບບໍ່ຖືກຕ້ອງຕິດພັນກັບການຄ້າມະນຸດໃນກຸ່ມເປົ້າໝາຍແມ່ຍິງຊົນເຜົ່າເຂດຫ່າງໄກສອກຫຼີກ.

ແນວລາວສ້າງຊາດແລະບັນດາອົງການພາຄີ ໄດ້ສະໜັບສະໜູນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ; ສະແດງຄວາມເຫັນດີເປັນເອກະພາບ ແລະ ສະໜັບສະໜູນຢ່າງແຂງແຮງຕໍ່ບັນດາຜົນງານການເຄື່ອນໄຫວຂອງສະພາແຫ່ງຊາດ; ຄຽງຄູ່ກັນນັ້ນ, ຍັງສະເໜີຕໍ່ສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ ເພີ່ມທະວີການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍຂອງກະຊວງ-ອົງການຕ່າງໆ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງກ່າວຕື່ມວ່າ: ການປະສານສົມທົບ ແລະ ພົວພັນລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ຄະນະປະຈຳສູນກາງແນວລາວສ້າງຊາດ ຍັງບໍ່ທັນຄ່ອງຕົວ ແລະ ມີປະສິດທິຜົນເທົ່າທີ່ຄວນ; ເພື່ອຍົກລະດັບການປະສານສົມທົບໃຫ້ສູງຂຶ້ນອີກບາດກ້າວໜຶ່ງ, ສະເໜີໃຫ້ຄະນະກຳມະການ ສນຊ ສະໄໝທີ XII ສືບຕໍ່ປະສານສົມທົບໃນການປັບປຸງຂໍ້ຕົກລົງວ່າດ້ວຍການພົວພັນລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ຄະນະປະຈຳສູນກາງແນວລາວສ້າງຊາດເປັນບົດບັນທຶກຮ່ວມລະຫວ່າງສອງພາກສ່ວນ (ຕາມກອງປະຊຸມຮ່ວມລະຫວ່າງ ຄປຈສພຊ ກັບ ສນຊ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູງກາງ) ໃຫ້ສາມາດເຊັ່ນຮ່ວມກັນໃນ ສພຊ ຊຸດທີ X, ປະສານສົມທົບທຸກພາກສ່ວນຂະແໜງການຂອງພັກ ແລະ ລັດ ເພື່ອສູ້ຊົນຈັດຕັ້ງປະຕິບັດຂໍ້ກຳນົດຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍລະບຽບການຕິດຕາມກວດກາຂອງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຕໍ່ບັນດາອົງການອຳນາດລັດ, ສະພາ, ສານ, ໄອຍະການ ໃຫ້ເປັນຮູບປະທຳ; ຮ່ວມກັນຈັດຕັ້ງກອງປະຊຸມສຳມະນາລະຫວ່າງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ກັບ ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຖອດຖອນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດບັນດາກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ ແລະ ການສ້າງນິຕິກຳໃຕ້ກົດໝາຍໃນຂົງເຂດຂອງແຕ່ລະອົງການ.

**ຄະນະບັນນາທິການ**

ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**

ທ່ານ ສອນສັກ ວັນວິໄຊ